ພາກທີ I: ພາກສະເໜີ

1. ປະຫວັດຄວາມເປັນມາ

ດັ່ງທີ່ພວກເຮົາຮັບຮູ້ກັນດີແລ້ວວ່າໃນສັງຄົມປະຈຸບັນການພັດທະນາແມ່ນການນຳເອົາຊັບພະຍາກອນທຳມະຊາດມາແປຮູບເປັນຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງມະນຸດທີ່ມີທ່າອ່ຽງທີ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ. ຜົນຂອງການພັດທະນາດັ່ງກ່າວໄດ້ເຮັດໃຫ້ຊັບພະຍາກອນທຳມະຊາດລຸດລົງ ແລະ ບາງຄັ້ງການພັດທະນາກໍ່ເຮັດໃຫ້ສະພາບແວດລ້ອມເກີດມີສະພາບທີ່ຊຸດໂຊມ. ສິ່ງດັ່ງກ່າວໄດ້ສົ່ງຜົນກະທົບທາງດ້ານລົບຕໍ່ສັດສາວາສິ່ງ ແລະ ສະພາບຊີວິດການເປັນຢູ່ຂອງມະນຸດ, ການປ່ຽນແປງຂອງດິນຟ້າອາກາດຊຶ່ງພາໃຫ້ເກີດມີໄພທຳມະຊາດເຊັ່ນ: ນ້ຳຖ້ວມ, ພະຍຸ, ໄພແຫ້ງແລ້ງ, ສະພາບມົນລະພາວະທາງອາກາດເຫລົ່ານີ້ເປັນຕົ້ນ, ໄພທຳມະຊາດເລົ່ານີ້ເກີດຂຶ້ນສ່ວນໜຶ່ງກໍຍ້ອນມະນຸດເຮົານຳໃຊ້ຊັບພະຍາກອນທຳມະຊາດ ໂດຍທີ່ບໍ່ມີການວາງແຜນ, ຈັດສັນລະອຽດ ແລະ ຄຳນຶງເຖິງຜົນໄດ້ທາງເສດຖະກິດຫຼາຍກ່ວາການຮັກສາສະພາບແວດລ້ອມ.

ໃນປະຈຸບັນນີ້ ອົງການຈັດຕັ້ງຕ່າງໆທັງພາກລັດ ແລະ ເອກະຊົນຕ່າງກໍໄດ້ພາກັນຊອກຫາມາດຕາການ ແລະ ຍຸດທະວິທີທີ່ຈະຊ່ວຍຫຼຸດຜ່ອນການນຳໃຊ້ຊັບພະຍາກອນທຳມະຊາດ ເພື່ອບໍ່ໃຫ້ສະພາບແວດລ້ອມມີຄວາມຊຸດໂຊມລົງໄປກ່ວາເກົ່າ, ທັງນີ້ກໍເພື່ອເຮັດໃຫ້ລະບົບນິເວດວິທະຍາມີຄວາມຍືນຍົງ ແລະ ເພື່ອຄວາມຍືນຍົງຂອງສັງຄົມມະນຸດ. ມາດຕະການການຮັກສາສະພາບແວດລ້ອມທີ່ກຳລັງຢູ່ໃນຄວາມສົນໃຈ ແລະ ກຳລັງເປັນທີ່ຍອມຮັບໃນປະຈຸບັນແມ່ນການກຳນົດມາດຕະຖານການບໍລິຫານກ່ຽວກັບການຜະລິດ ແລະ ການບໍລິຫານທີ່ມີການອະນຸລັກພະລັງ ງານ ແລະ ຮັກສາສິ່ງແວດລ້ອມ, ຜົນທີ່ໄດ້ຮັບຈາກການກຳນົດມາດຕະການດັ່ງກ່າວແມ່ນເປັນທີ່ຍອມຮັບຂອງສັງຄົມຄືຄວາມສົນໃຈຂອງປະຊາຊົນທີ່ເລືອກຊື້ ຫຼື ນຳໃຊ້ບໍລິການສິນຄ້າທີ່ໄດ້ຮັບຮອງມາດຖານເລົ່ານີ້.

ການທ່ອງທ່ຽວເປັນອຸດສາຫະກຳປະເພດໜຶ່ງ ທີ່ພົວພັນກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໂດຍກົງ ໃນຖານະທີ່ເປັນປັດໃຈທີ່ມີຄຸນຄ່າໃນການດຶງດູດນັກທ່ອງທ່ຽວໃຫ້ມາຢ້ຽມຢາມສະຖານທີ່ທ່ອງທ່ຽວອຸດສາຫະກຳ ການທ່ອງທ່ຽວເປັນຂະແໜງການເສດຖະກິດທີ່ສ້າງອາຊີບ, ສ້າງລາຍໄດ້ໃຫ້ສັງຄົມ ແລະ ຊ່ວຍຊຸກຍູ້ເສດຖະກິດຂອງປະເທດ ແຫຼ່ງທ່ອງທ່ຽວຫຼາຍແຫ່ງໄດ້ຮັບການພັດທະນາໃຫ້ເປັນສະຖານທີ່ທ່ອງທ່ຽວ ທີ່ສາມາດດຶງດູດນັກທ່ອງທ່ຽວໄດ້ເປັນຈຳນວນຫຼາຍໃນແຕ່ລະປີ ແລະ ກໍໄດ້ມີຜົນຕອບແທນທາງເສດຖະກິດກັບມາໃຫ້ປະເທດຊາດນັບມື້ເພີ່ມຂຶ້ນ, ສະແດງອອກຄືໃນປີ 1990 ຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ຽວ ໃນ ສປປ ລາວ ມີພຽງ 14.000 ຄົນ, ປີ 2000 ມີນັກທ່ອງທ່ຽວເຂົ້າປະເທດເຖິງ 737.208 ຄົນ ສາມາດສ້າງລາຍຮັບໄດ້ 113.898.285 ໂດລາສະຫະລັດ, ມາຮອດປີ 2010 ຈຳນວນນັກທ່ອງທ່ຽວເພີ່ມຂຶ້ນເຖິງ 2.513.028 ເທື່ອຄົນ, ສະເລ່ຍແລ້ວນັກທ່ອງທ່ຽວເພີ່ມຂຶ້ນໃນແຕ່ລະປີ 20-26% ມີລາຍຮັບເຖິງ

381.669.031 ໂດລາສະຫະລັດ ຊຶ່ງຖືວ່າເປັນຂະແໜງການເສດຖະກິດທີ່ສ້າງແຫຼ່ງລາຍຮັບໃຫ້ ສປປ ລາວ ເປັນອັນດັບທີ່ສອງຮອງຈາກຂະແໜງການບໍ່ແຮ່.

ສັງເກດເຫັນວ່າ ໃນການພັດທະນາແຫຼ່ງທ່ອງທ່ຽວໃນໄລຍະທີ່ຜ່ານມາ ແມ່ນພວກເຮົາມີແຕ່ຕ້ອງການນຳໃຊ້ຊັບພະຍາກອນແຕ່ການດູແລຮັກສາ ແລະ ອະນຸລັກແມ່ນຍັງບໍ່ທັນໄດ້ຮັບການເອົາໃຈໃສ່ຈາກພາກສ່ວນທີ່ກ່ຽວຂ້ອງເທົ່າທີ່ຄວນ, ເພື່ອເປັນການເປີດກ້ວາງການລົງທຶນລັດຖະບານກໍ່ໄດ້ອະນຸຍາດໃຫ້ມີການສຳປະທານທີ່ດິນເພື່ອປູກພືດເສດຖະກິດ, ການຂຸດຄົ້ນບໍ່ແຮ ເພື່ອເປັນສິນຄ້າສົ່ງອອກ. ນະໂຍບາຍດັ່ງກ່າວແມ່ນຖືກຕ້ອງກັບແນວທາງຂອງພັກ-ລັດໃນການສຸມທ່າແຮງຂອງທຸກພາກສ່ວນເສດຖະກິດເຂົ້າໃນການສ້າງສາປະເທດຊາດ ເພື່ອຊ່ວຍໃຫ້ປະເທດລຸດພົ້ນຈາກຄວາມທຸກຍາກໃນປີ 2020. ແຕ່ໃນການຈັດຕັ້ງປະຕິບັດຕົວຈິງບາງຄັ້ງການສຳປະທານດັ່ງກ່າວກໍ່ກະທົບເຖິງທຳມະຊາດ ແລະ ຊັບພະຍາກອນທີ່ເປັນແຫຼ່ງທ່ອງທ່ຽວ ຊຶ່ງພວກເຮົາຍັງຂາດການວິໄຈຂໍ້ມູນລະອຽດກ່ຽວກັບຜົນໄດ້ຮັບ-ຜົນເສຍ ໃນໄລຍະຍາວຕໍ່ແຕ່ລະພາກສ່ວນເສດຖະກິດ, ເຈົ້າລວມ, ເວົ້າສະເພາະແມ່ນຕໍ່ຂະແໜງການທ່ອງທ່ຽວ.

ສຳລັບຂະແໜງການທ່ອງທ່ຽວ ເພື່ອແກ້ໄຂບັນຫາຂ້າງເທິງພວກເຮົາກໍຍັງບໍ່ທັນມີເອກະສານອ້າງອີງທາງດ້ານວິຊາການໃນການຈັດສັນກຳນົດເຂດແຫຼ່ງທ່ອງທ່ຽວ ຊຶ່ງແຫຼ່ງທ່ອງທ່ຽວກໍມີຢູ່ທົ່ວໄປທີ່ຕິດພັນກັບຊັບພະຍາກອນທີ່ລັດຖະບານຕ້ອງການໃຫ້ມີການລົງທຶນດັ່ງທີ່ກ່າວມາຂ້າງເທິງ.

ການຈັດສັນແຫຼ່ງທ່ອງທ່ຽວ ກໍ່ເປັນເຄື່ອງມືອັນໜຶ່ງທີ່ຈະຊ່ວຍໃຫ້ແຫຼ່ງທ່ອງທ່ຽວມີການພັດທະນາທີ່ດີຂຶ້ນ ການຈັດສັນແຫຼ່ງທ່ອງທ່ຽວຖືວ່າເປັນວຽກໃໝ່ ຊຶ່ງມີຄວາມລະອຽດອ່ອນ, ມີຫຼາຍພາກສ່ວນຮັບຜິດຊອບ ແລະ ມີຄວາມທ້າທາຍພໍສົມຄວນ.

ເພື່ອເຮັດໃຫ້ກິດຈະກຳດັ່ງກ່າວເປັນຮູບປະທຳ ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ໄດ້ສ້າງຄູ່ມືການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ ຊຶ່ງເອກະສານດັ່ງກ່າວໄດ້ເລີ້ມຮ່າງມາແຕ່ຕົ້ນປີ 2008, ການຮ່າງເອກະສານດັ່ງກ່າວແມ່ນພວກເຮົາບໍ່ທັນມີປະສົບການຫຼາຍ, ແຕ່ກໍ່ໄດ້ເອົາກິດໝາຍວ່າດ້ວຍການທ່ອງທ່ຽວເປັນບ່ອນອີງ ແລະ ອາໄສການຄົ້ນຄ້ວາເອກະສານຈາກປຶ້ມຽນຂອງປະເທດເພື່ອນບ້ານ ໃນຂະບວນການຄົ້ນຄ້ວາເອກະສານດັ່ງກ່າວແມ່ນໄດ້ເຊີນເອົາພາກສ່ວນທີ່ກ່ຽວຂ້ອງຂອງສູນກາງເຂົ້າຮ່ວມ ແລະ ໄດ້ນຳສົ່ງເອກະສານດັ່ງກ່າວໃຫ້ແຕ່ລະແຂວງຄົ້ນຄ້ວາປະກອບຄຳເຫັນ. ໃນປີ 2009 ອົງການທ່ອງທ່ຽວແຫ່ງຊາດ ກໍ່ໄດ້ນຳສະເໜີຫາສຳນັກງານນາຍົກເພື່ອຮັບຮອງ, ແຕ່ກໍ່ຍັງມີເນື້ອໃນບາງອັນບໍ່ທັນຄົບຖ້ວນ ຫຼື ສອດຄ່ອງຈຶ່ງມີການຄົ້ນຄ້ວາກັບໄປກັບມາຫຼາຍຄັ້ງ. ຍ້ອນເປັນວຽກທີ່ມີຄວາມຮີບດ່ວນ ແລະ ຈຳເປັນໄປຄຽງຄູ່ກັບການຄົ້ນຄ້ວາເອກະສານດັ່ງກ່າວຄະນະນຳຂອງອົງການທ່ອງທ່ຽວແຫ່ງຊາດ ໄດ້ຊີ້ນຳໃຫ້ລົງຈັດຕັ້ງປະຕິບັດການຈັດສັນແຫຼ່ງທ່ອງທ່ຽວ ເພື່ອເປັນການສຶກສາຖອດຖອນບົດຮຽນ, ໃນສົກປີ 2010 - 2011. ກົມແຜນການ ແລະ ການຮ່ວມມື (ປະຈຸບັນແມ່ນກົມພັດທະນາການທ່ອງທ່ຽວ) ກໍ່ໄດ້ລົງຈັດຕັ້ງປະຕິບັດການຈັດສັນ

ແຫຼ່ງທ່ອງທ່ຽວໃນຫຼາຍແຂວງຄື: ແຂວງອັດຕະປື, ແຂວງເຊກອງ, ແຂວງສາລະວັນ, ແຂວງຫຼວງນ້ຳທາ, ແຂວງໄຊຍະບູລີ ແລະ ແຂວງວຽງຈັນ, ແຂວງລະ 1 ແຫ່ງ.

ການລົງໄປຈັດຕັ້ງປະຕິບັດວຽກງານການຈັດສັນແຫຼ່ງທ່ອງທ່ຽວໃນແຕ່ລະແຂວງ, ແມ່ນໄດ້ມີການຈັດກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ເມືອງ ແລະ ບ້ານ, ໄດ້ມີການລົງສຳຫຼວດກຳນົດເຂດເນື້ອທີ່ດິນແຫຼ່ງທ່ອງທ່ຽວແຕ່ລະແຫ່ງ, ສຳຫຼວດເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ສະພາບແວດລ້ອມຂອງປະຊາຊົນໃນໝູ່ບ້ານບໍລິເວນແຫຼ່ງທ່ອງທ່ຽວ ແລະ ເຂດໃກ້ຄຽງ. ພາຍຫຼັງການລົງສຳຫຼວດກໍ່ໄດ້ມີການສັງລວມຂໍ້ມູນ ແລະ ຮ່ວມກັບແຂວງກຳນົດກິດຈະກຳການທ່ອງທ່ຽວໃນແຕ່ລະແຫ່ງ ຊຶ່ງກໍໄດ້ຈັດກອງປະຊຸມລາຍງານໃຫ້ອຳນາດການປົກຄອງແຂວງເພື່ອປຶກສາຫາລື ແລະ ຂໍທິດຊີ້ນຳ.

ການລົງຈັດຕັ້ງປະຕິບັດການຈັດສັນແຫຼ່ງທ່ອງທ່ຽວ ໃນບັນດາແຂວງທີ່ກ່າວມາຂ້າງເທິງນັ້ນ ພວກເຮົາໄດ້ປະສົບການ ແລະ ຖອດຖອນໄດ້ບົດຮຽນຢ່າງໃຫ່ຍຫຼວງ ຊຶ່ງເປັນການຖອດຖອນບົດຮຽນໃຫ້ພວກເຮົາໃນການຈັດລະດັບແຫຼ່ງທ່ອງທ່ຽວ ໃນ ສປປ ລາວ ຄວນຈະດຳເນີນການຈັດສັນກຳນົດເຂດພື້ນທີ່ແຫຼ່ງທ່ອງທ່ຽວ ແລະ ພັດທະນາກ່ອນ ແລະ ມີການປະເມີນຜົນໃນແຕ່ລະໄລຍະ, ມີການປັບປຸງພັດທະນາເລື້ອຍໆແລ້ວຈຶ່ງກ້າວໄປເຖິງການຈັດລະດັບແຫຼ່ງທ່ອງທ່ຽວໃນຂັ້ນຕອນຕໍ່ໄປ ຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍການທ່ອງທ່ຽວມາດຕາ 12-13.

ເພື່ອສືບຕໍ່ເຮັດໃຫ້ການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ ໄດ້ມີເອກະສານແນະນຳທາງດ້ານວິຊາການໃນການຈັດຕັ້ງປະຕິບັດຕົວຈິງ ກົມພັດທະນາການທ່ອງທ່ຽວຈຶ່ງໄດ້ຄົ້ນຄ້ວາ ແລະ ຮ່າງເອກະສານຄູ່ມື ການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການພັດທະນາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ເພື່ອຄວາມຍືນຍົງທຶນຊ່ວຍເຫຼືອຂອງລັດຖະບານນິວຊີແລນ ເພື່ອເປັນເອກະສານແນະນຳໃນການຈັດຕັ້ງປະຕິບັດຕົວຈິງ. ຊຶ່ງພວກເຮົາເຊື່ອວ່າເອກະສານດັ່ງກ່າວນີ້ ຈະເປັນຄູ່ມືຊ່ວຍໃນການຈັດສັນແຫຼ່ງທ່ອງທ່ຽວໃນທ້ອງປະເທດໄດ້ໃນລະດັບທີ່ແນ່ນອນ.

ພາກທີ II: ວິທີການຈັດສັນແຫຼ່ງທ່ອງທ່ຽວໃນ ສປປ ລາວ

ເອກະສານຄູ່ມືແນະນຳທາງດ້ານວິຊາການກ່ຽວກັບການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ ປະກອບມີລາຍລະອຽດດັ່ງນີ້:

1. ນິຍາມແຫຼ່ງທ່ອງທ່ຽວ
2. ຄວາມໝາຍຄວາມສຳຄັນຂອງການຈັດສັນແຫຼ່ງທ່ອງທ່ຽວ
3. ຈຸດປະສົງຂອງການຈັດສັນແຫຼ່ງທ່ອງທ່ຽວ
4. ຮູບແບບການຈັດສັນແຫຼ່ງທ່ອງທ່ຽວ
5 ການກຳນົດເງື່ອນໄຂປະເພດແຫຼ່ງທ່ອງທ່ຽວ ແລະ ມາດຖານຫຼ່ງທ່ອງທ່ຽວ
6. ຂັ້ນຕອນ ແລະ ວິທີການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ ລາຍລະອຽດມີ ດັ່ງນີ້:

1. ນິຍາມແຫຼ່ງທ່ອງທ່ຽວ

ແຫຼ່ງທ່ອງທ່ຽວແມ່ນສະຖານທີ່ຊຶ່ງນັກທ່ອງທ່ຽວໄປທ່ຽວຊົມ ເພື່ອການພັກຜ່ອນຢ່ອນໃຈ, ເພື່ອການສຶກສາຮຽນຮູ້ ຊຶ່ງແຫຼ່ງທ່ອງທ່ຽວເຫຼົ່ານີ້ແມ່ນມາຈາກຊັບພະຍາກອນການທ່ອງທ່ຽວທາງທຳມະຊາດ ແລະ ຊັບພະຍາກອນການທ່ອງທ່ຽວທີ່ມະນຸດສ້າງຂຶ້ນ.

- ຊັບພະຍາກອນການທ່ອງທ່ຽວທາງທຳມະຊາດປະກອບດ້ວຍ: ທັດສະນີຍະພາບ, ປ່າສະຫງວນ, ປ່າໄມ້, ຜາ, ຖ້ຳ, ພູພຽງ, ພູສູງ, ພູໄຟ, ພຶດພັນ, ສັດປ່າ, ສັດນ້ຳ, ແມງໄມ້, ດອກໄມ້, ແມ່ນ້ຳ, ດອນ, ຫາດຊາຍ, ໜອງ, ບຶງ, ນ້ຳຕົກຕາດ, ແກ້ງ, ບໍ່ນ້ຳຮ້ອນ, ປະກົດການທຳມະຊາດ ແລະ ອື່ນໆ.
- ຊັບພະຍາກອນການທ່ອງທ່ຽວ ທີ່ມະນຸດສ້າງຂຶ້ນປະກອບດ້ວຍ:
  - ຊັບພະຍາກອນການທ່ອງທ່ຽວທາງດ້ານວັດທະນະທຳເຊັ່ນ: ສິລະປະກຳ, ສະຖາປັດຕິຍະກຳ, ປູຊະນີຍະສະຖານ, ບູຮານວັດຖຸ, ບູຮານສະຖານ, ວັດວາອາຮາມ, ອາຄານບ້ານເຮືອນ, ສິນລະປະວັນນະຄະດີ, ນິທັດສະການ, ເທດສະການ, ງານບຸນປະເພນີ ແລະ ພິທີກຳຕ່າງໆ, ວິຖີຊີວິດ, ສູນການຄ້າ, ສູນວາງສະແດງ ແລະ ກິດຈະກຳອື່ນໆ ທີ່ກ່ຽວຂ້ອງ.

- ຊັບພະຍາກອນການທ່ອງທ່ຽວທາງດ້ານປະຫວັດສາດເຊັ່ນ: ຫໍພິພິທະພັນ, ອະນຸສອນສະຖານ, ຫໍໂຮງ, ສະຖານທີ່ເກີດ, ອາໄສ ແລະ ເຮັດວຽກຂອງບຸກຄົນສຳຄັນ, ຮ່ອງຮອຍສະໝັລະພູມ.
- ຊັບພະຍາກອນການທ່ອງທ່ຽວທີ່ມະນຸດສ້າງຂຶ້ນແບບທຳມະຊາດເຊັ່ນ: ສວນສາທາລະນະ, ສວນສະໜຸກ, ສວນສັດ, ສະຖານທີ່ຈຳລອງ.

2. ຄວາມໝາຍ ຄວາມສຳຄັນຂອງການຈັດສັນແຫຼ່ງທ່ອງທ່ຽວ

ການຈັດສັນແຫຼ່ງທ່ອງທ່ຽວໝາຍເຖິງການກຳນົດປະເພດຂອງແຫຼ່ງທ່ອງທ່ຽວ ໃນຂອບເຂດພື້ນທີ່ທີ່ມີການສຳຫຼວດ, ການກຳນົດແບ່ງເຂດພາຍໃນແຫຼ່ງທ່ອງທ່ຽວ ເພື່ອວາງແຜນພັດທະນາ, ການກຳນົດລາຍລະອຽດຂອງກິດຈະກຳໃສ່ປະເພດແຫຼ່ງທ່ອງທ່ຽວ, ມີການບໍລິຫານຄຸ້ມຄອງທາງວິຊາການທີ່ເປັນລະບົບ, ມີຄວາມເຂັ້ມງວດໃນການຮັກສາສິ່ງແວດລ້ອມ.

ໃນດ້ານຫຼັກການແລ້ວການຈັດສັນແຫຼ່ງທ່ອງທ່ຽວ ແມ່ນພາກສ່ວນໜຶ່ງຂອງການວາງແຜນພັດທະນາແຫຼ່ງທ່ອງທ່ຽວທີ່ສາມາດຈັດຕັ້ງປະຕິບັດໂດຍກົງກັບແຫຼ່ງທ່ອງທ່ຽວທົ່ວໄປ, ມີການສຳຫຼວດກຳນົດຂອບເຂດເນື້ອທີ່, ສຳຫຼວດສະພາບເສດຖະກິດ-ວັດທະນະທຳ-ສັງຄົມພາຍໃນແຫຼ່ງທ່ອງທ່ຽວ, ກຳນົດໂຄງສ້າງການປັບປຸງການບໍລິຫານ ແລະ ການຄຸ້ມຄອງພາຍໃນແຫຼ່ງທ່ອງທ່ຽວ, ກຳນົດລາຍລະອຽດກິດຈະກຳ ຢູ່ໃນແຫຼ່ງທ່ອງທ່ຽວນັ້ນໆໃຫ້ແທດເໝາະກັບຈຸດພິເສດສະເພາະ, ທ່າແຮງຂອງແຫຼ່ງທ່ອງທ່ຽວ, ຄວາມພ້ອມຂອງບຸກຄະລາກອນ ແລະ ຄວາມຕ້ອງການຂອງຕະຫຼາດ.

ການຈັດສັນແຫຼ່ງທ່ອງທ່ຽວມີຄວາມສຳຄັນຕໍ່ການສະຫງວນ, ຟື້ນຟູ, ຄຸ້ມຄອງຮັກສາແຫຼ່ງທ່ອງທ່ຽວໃຫ້ມີສະພາບດີ ເພື່ອສາມາດນຳໃຊ້ໃຫ້ຍາວນານ ແລະ ຕະຫຼອດໄປ. ຊັບພະຍາກອນການທ່ອງທ່ຽວຕ້ອງໄດ້ຮັບການບໍລິຫານຄຸ້ມຄອງດ້ານສິ່ງແວດລ້ອມ, ການປ້ອງກັນ ແລະ ການຫລຸດຜ່ອນສາເຫດຕ່າງໆທີ່ອາດຈະສົ່ງຜົນກະທົບທາງດ້ານລົບ. ຜູ້ຄຸ້ມຄອງພື້ນທີ່ ແລະ ຜູ້ທີ່ມີສ່ວນຮ່ວມທັງຫມົດໃນສັງຄົມເຊັ່ນ: ພາກລັດຖະບານ, ພາກເອກະຊົນ, ສະຖາບັນຕ່າງໆໃນສັງຄົມ, ປະຊາຊົນໃນທ້ອງຖິ່ນ ແລະ ນັກທ່ອງທ່ຽວຕ້ອງຮ່ວມກັນອະນຸລັກຮັກສາສະພາບແວດລ້ອມບໍ່ທຳລາຍ ແລະ ບໍ່ສ້າງຄວາມເສຍຫາຍໃຫ້ແກ່ຊັບພະຍາກອນໃນພື້ນທີ່. ພ້ອມນີ້, ກຳຈັດສັນແບ່ງເຂດພັດທະນາການທ່ອງທ່ຽວ ຫຼື (Zoning) ແຕ່ຫົວທີເຊັ່ນ: ເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການ. ສ້າງລະບຽບການກ່ຽວກັບການນຳໃຊ້ທີ່ດິນ ແລະ ການປຸກສ້າງໃນບໍລິເວນແຫຼ່ງທ່ອງທ່ຽວ. ການພັດທະນາແຫຼ່ງທ່ອງທ່ຽວແຕ່ລະແຫ່ງແມ່ນພັດທະນາຕາມທ່າແຮງ, ຂັ້ນຕອນເລີ່ມແຕ່ນ້ອຍໄປຫາໃຫຍ່ ແລະ ຈາກຫນ້ອຍໄປຫາຫຼາຍ. ມີການກວດກາປະເມີນຜົນກະທົບຕໍ່ສິ່ງແວດລ້ອມລ້ອມໃນແຫຼ່ງທ່ອງທ່ຽວຢ່າງຕໍ່ເນື່ອງ ແລະ ມີການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນຢ່າງທັນການ.

3. ຈຸດປະສົງຂອງການຈັດສັນແຫຼ່ງທ່ອງທ່ຽວ

- ກຳນົດຂອບເຂດຂອງແຫຼ່ງທ່ອງທ່ຽວແຕ່ລະແຫ່ງ, ການຈັດສັນ, ແບ່ງເຂດພາຍໃນແຫຼ່ງທ່ອງທ່ຽວ, ຊຶ່ງການແບ່ງເຂດພາຍໃນແຫຼ່ງທ່ອງທ່ຽວ ເປັນພື້ນຖານໃຫ້ແກ່ການກຳນົດບັນດາກິດຈະກຳຕາມທີ່ຕັ້ງພູມສັນຖານ ແລະ ທ່າແຮງຂອງຊັບພະຍາກອນພາຍໃນແຫຼ່ງທ່ອງທ່ຽວ.
- ເພື່ອເປັນດັດສະນີຊີ້ວັດໃນການກຳນົດເງື່ອນໄຂ ແຫຼ່ງທ່ອງທ່ຽວແຕ່ລະປະເພດຄື: ແຫຼ່ງທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດໃຫ້ລະອຽດ, ຖືກຕ້ອງໂດຍອີງໃສ່ຈຸດພິເສດ, ທ່າແຮງຂອງຊັບພະຍາກອນທີ່ມີໃນແຫຼ່ງທ່ອງທ່ຽວ.
- ເພື່ອກຳນົດການວາງແຜນພັດທະນາກິດຈະກຳການທ່ອງທ່ຽວ ທີ່ສາມາດສ້າງຂຶ້ນໄດ້ບົນພື້ນຖານທ່າແຮງຂອງຊັບພະຍາກອນທີ່ມີຢູ່ໃນແຫຼ່ງທ່ອງທ່ຽວນັ້ນໆ.
- ເພື່ອຈັດບູລິມາສິດໃນການພັດທະນາ ແລະ ເປັນຕົວຊີ້ວັດໃຫ້ແກ່ການກວດກາການພັດທະນາແຫຼ່ງທ່ອງທ່ຽວໃນແຕ່ລະແຫ່ງ, ໃນແຕ່ລະໄລຍະສ້າງເງື່ອນໄຂກ້າວໄປເຖິງການຈັດລະດັບແຫຼ່ງທ່ອງທ່ຽວໃນຂັ້ນຕໍ່ໄປ.
- ໃຫ້ໄດ້ເຄື່ອງມືສຳລັບກວດສອບຄວາມພ້ອມຂອງແຫຼ່ງທ່ອງທ່ຽວ ເພື່ອພິຈາລະນາໃນການລົງທຶນພັດທະນາ (ການລົງທຶນຂອງພາກສ່ວນຕ່າງໆ ຫຼື ການສຳປະທານ).
- ສຳລັບໜ່ວຍງານທີ່ຮັບຜິດຊອບສາມາດໃຊ້ເປັນບ່ອນອີງ ໃນການກວດສອບເພື່ອພັດທະນາສິ່ງອຳນວຍຄວາມສະດວກ, ປັບປຸງຄຸນນະພາບ ແລະ ສ້າງລະບົບກົນໄກການບໍລິຫານຄຸ້ມຄອງແຫຼ່ງທ່ອງທ່ຽວ.
- ເປັນແນວທາງເພື່ອສົ່ງເສີມໃຫ້ພາກສ່ວນກ່ຽວຂ້ອງ ຫຼື ບຸກຄະລາກອນໃນຂະແໜງການທ່ອງທ່ຽວໄດ້ມີການສຶກສາ, ວິໄຈ ແລະ ກຳນົດທິດທາງພັດທະນາ, ຍົກລະດັບຄວາມສາມາດໃນການບໍລິຫານຄຸ້ມຄອງແຫຼ່ງທ່ອງທ່ຽວ ໃນແຕ່ລະໄລຍະໃຫ້ຖືກຕ້ອງ ແລະ ເປັນການສ້າງເງື່ອນໄຂ ເພື່ອຈັດຕັ້ງປະຕິບັດການຈັດລະດັບແຫຼ່ງທ່ອງທ່ຽວຕາມກົດໝາຍວ່າດ້ວຍການທ່ອງທ່ຽວໃນຂັ້ນຕອນຕໍ່ໄປ.

4. ການກຳນົດເງື່ອນໄຂປະເພດແຫຼ່ງທ່ອງທ່ຽວ ແລະ ມາດຖານແຫຼ່ງທ່ອງທ່ຽວ

4.1 ການກຳນົດເງື່ອນໄຂປະເພດແຫຼ່ງທ່ອງທ່ຽວ

ການກຳນົດເງື່ອນໄຂປະເພດແຫຼ່ງທ່ອງທ່ຽວ ແມ່ນບົນພື້ນຖານທ່າແຮງຂອງຊັບພະຍາກອນທີ່ມີໃນແຫຼ່ງທ່ອງທ່ຽວ ສປປ ລາວ ມີແຫຼ່ງທ່ອງທ່ຽວທີ່ມີຄວາມຫຼາກຫຼາຍ ຊຶ່ງແຫຼ່ງທ່ອງທ່ຽວທີ່ຖືກຈັດເຂົ້າໃນປະເພດ: ແຫຼ່ງທ່ອງທ່ຽວທຳມະຊາດ, ແຫຼ່ງທ່ອງທ່ຽວວັດທະນະທຳ ແລະ ປະຫວັດສາດແມ່ນໄດ້ກຳນົດຕາມລັກສະນະ, ທ່າແຮງ, ຄຸນຄ່າຂອງແຫຼ່ງທ່ອງທ່ຽວ. ໃນປະຈຸ

ບັນການທ່ອງທ່ຽວໄດ້ພັດທະນາຢ່າງກ້ວາງຂວາງ ແລະ ກາຍເປັນກິດຈະກຳໜຶ່ງຂອງສັງຄົມ ທີ່ຕິດພັນຢູ່ກັບທຸກຂະແໜງການ, ແຫຼ່ງທ່ອງທ່ຽວຈະຖືກຈັດສະເພາະປະເພດດຽວຖ້າມີທ່າ ແຮງດ້ານດຽວ, ແຕ່ສ່ວນຫຼາຍແມ່ນເປັນແຫຼ່ງທ່ອງທ່ຽວດຽວແຕ່ມີຫຼາຍປະເພດເຊັ່ນ: ແຫຼ່ງ ທ່ອງທ່ຽວທຳມະຊາດ-ວັດທະນະທຳ, ແຫຼ່ງທ່ອງທ່ຽວປະຫວັດສາດ-ວັດທະນະທຳ, ແຫຼ່ງທ່ອງ ທ່ຽວທຳມະຊາດ-ປະຫວັດສາດ ແຕ່ທີ່ຜ່ານມາພວກເຮົາເຫັນວ່າປະເພດໃດມີທ່າແຮງກ່ວາກໍ ຈະໃຫ້ນ້ຳໜັກຫຼາຍກ່ວາ.

4.1.1 ແຫຼ່ງທ່ອງທ່ຽວທຳມະຊາດ

ແມ່ນແຫຼ່ງທ່ອງທ່ຽວທີ່ມີທ່າແຮງທາງດ້ານທຳມະຊາດ ແລະ ສິ່ງແວດລ້ອມສູງ ຊຶ່ງປະກອບມີ: ຊັບພະຍາກອນທຳມະຊາດທີ່ເປັນປ່າດົງຕົບໜາ, ປ່າສະຫງວນ, ພູຜາ, ຖ້ຳ, ພູສູງ, ພູໄຟ, ປ່າໄມ້, ທະເລ, ແມ່ນ້ຳ, ດອນ, ຫາດຊາຍ, ໜອງ, ບຶງ, ນ້ຳຕົກຕາດ, ແກ້ງ, ບໍ່ນ້ຳຮ້ອນ, ສວນອຸດທິຍານໃນການຈັດສັນນີ້ແຫຼ່ງທ່ອງທ່ຽວທຳມະຊາດໄດ້ແຍກ ເປັນ 3 ປະເພດຄື:

- **ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີສະພາບເດີມບໍ່ມີການດັດແປງ:** ເປັນແຫຼ່ງທ່ອງທ່ຽວທຳ ມະຊາດທີ່ບໍ່ທັນມີການພັດທະນາ: ແຫຼ່ງທ່ອງທ່ຽວກຸ່ມນີ້ສ່ວນຫຼາຍຕັ້ງຢູ່ຫ່າງໄກ, ມີພູ ຜາສູງຊັນຍັງມີສະພາບທຳມະຊາດທີ່ອຸດົມສົມບູນມີປະລິມານການທ່ອງທ່ຽວບໍ່ຫຼາຍ, ການບໍລິຫານຄຸ້ມຄອງການທ່ອງທ່ຽວບໍ່ຄ່ອຍມີ. ສາເຫດຍ້ອນການເຂົ້າເຖິງບໍ່ສະດວກ ຫຼື ບາງແຫ່ງບໍ່ມີເສັ້ນທາງໄປເຖິງ, ແຫຼ່ງທ່ອງທ່ຽວທຳມະຊາດດັ່ງກ່າວນີ້ສ່ວນໜຶ່ງກໍ່ ເປັນປ່າສະຫງວນແຫ່ງຊາດ.
- **ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີການພັດທະນາແຕ່ຍັງຮັກສາສະພາບເດີມ:** ໃນ ສປປ ລາວ ແຫຼ່ງທ່ອງທ່ຽວທຳມະຊາດປະເພດນີ້ ເກືອບທັງໝົດແມ່ນຢູ່ໃນປ່າສະຫງວນທີ່ ຢູ່ໃນພື້ນທີ່ໃກ້ຄຽງກັບບ້ານປະຊາຊົນ, ແຫຼ່ງທ່ອງທ່ຽວກຸ່ມນີ້ກໍ່ຍັງມີສະພາບແວດລ້ອມ ທີ່ດີແຕ່ເປັນພື້ນທີ່ທຳມະຊາດທີ່ພັດທະນາ, ປັບປຸງ ແລະ ປ່ຽນແປງເພື່ອອຳນວຍ ຄວາມສະດວກ, ຕອບສະໜອງໃຫ້ການບໍລິການທ່ອງທ່ຽວ, ການເຂົ້າເຖິງແມ່ນມີ ຄວາມສະດວກທັງທາງບົກ ແລະ ທາງນ້ຳ. ການບໍລິການທ່ອງທ່ຽວ ແລະ ການຄຸ້ມ ຄອງບໍລິຫານດ້ານການທ່ອງທ່ຽວແມ່ນມີຫຼາຍ, ບາງແຫ່ງກໍເປັນລະບົບໄດ້ມາດຖານ ສົມຄວນມີສິ່ງອຳນວຍຄວາມສະດວກ ພາຍໃນແຫຼ່ງທ່ອງທ່ຽວເຊັ່ນ: ບ່ອນຖິ້ມຂີ້ ເຫຍື້ອ, ຫ້ອງນ້ຳ, ຮ້ານອາຫານ, ຮ້ານຈຳໜ່າຍເຄື່ອງທີ່ລະນຶກ, ຫ້ອງຂໍ້ມູນຂ່າວສານ ຫຼື ກະດານຂ່າວ, ປ້າຍຊີ້ບອກຕ່າງໆ ຊຶ່ງການອອກແບບສິ່ງອຳນວຍຄວາມສະດວກ ໃນແຫຼ່ງທ່ອງທ່ຽວແມ່ນມີຄວາມກົມກືນກັບທຳມະຊາດ.

- **ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີການພັດທະນາ ແລະ ກໍ່ສ້າງເພີ້ມເຕີມ:** ເປັນແຫຼ່ງທ່ອງທ່ຽວພັດທະນາແລ້ວມີການຈັດກິດຈະກຳຕອບສະໜອງ ຕາມຄວາມຕ້ອງການສິ່ງອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວ.

ສຳລັບແຫຼ່ງທ່ອງທ່ຽວທຳມະຊາດທີ່ມະນຸດສ້າງຂຶ້ນໂດຍການຈຳລອງນັ້ນມີການບໍລິຫານຈັດການທີ່ເປັນລະບົບແລ້ວ.

4.1.2 ແຫຼ່ງທ່ອງທ່ຽວວັດທະນະທຳ

ເປັນສະຖານທີ່ບູຮານສະຖານ, ວັດວາອາຮາມ, ອາຄານບ້ານເຮືອນ, ສິນລະປະວັນນະຄະດີ, ນິທັດສະການ, ເທດສະການ, ງານບຸນ ແລະ ພິທີກຳຕ່າງໆ, ວິຖີຊີວິດ, ສູນການຄ້າ, ສູນວາງສະແດງ ແລະ ກິດຈະກຳອື່ນໆທີ່ກ່ຽວຂ້ອງ, ຊຶ່ງແຫຼ່ງທ່ອງທ່ຽວເລົ່ານີ້ ແມ່ນວັດທະນະທຳປະເພນີ ແລະ ກິດຈະກຳ. ແຫຼ່ງທ່ອງທ່ຽວວັດທະນະທຳປະກອບມີ 3 ປະເພດດັ່ງນີ້:

- **ແຫຼ່ງທ່ອງທ່ຽວວັດທະນະທຳປະເພດວິຖີຊີວິດ:** ບ້ານຊົນເຜົ່າ, ບ້ານຫັດຖະກຳພື້ນເມືອງ, ຜູ້ມາຢ້ຽມຊົມໄດ້ສັງເກດເຫັນຄວາມເປັນຢູ່ ແລະ ວິຖີຊີວິດຂອງປະຊາຊົນໃນທ້ອງຖິ່ນດ້ວຍຕົນເອງ ແລະ ມີສ່ວນຮ່ວມໃນກິດຈະກຳກັບຊຸມຊົນ ຊຶ່ງແຫຼ່ງທ່ອງທ່ຽວປະເພດນີ້ສ່ວນຫຼາຍແມ່ນຢູ່ແຖບຊົນນະບົດຮ່ຳໄກຈາກຕົວເມືອງ.
- **ແຫຼ່ງທ່ອງທ່ຽວວັດທະນະທຳພື້ນເມືອງ:** ເປັນສະຖານທີ່ບູຮານສະຖານ, ວັດວາອາຮາມ, ອາຄານບ້ານເຮືອນ, ສິນລະປະວັນນະຄະດີ, ນິທັດສະການ, ເທດສະການ, ງານບຸນ ແລະ ພິທີກຳຕ່າງໆ.
- **ແຫຼ່ງກິດຈະກຳປະກອບອາຊີບ:** ສູນວິໄຈ, ສູນການຄ້າ, ສວນສະໜຸກ, ສະຖານບັນເທີງ, ແລະ ສະຖານີທົດລອງແຫຼ່ງທ່ອງທ່ຽວດັ່ງກ່າວນີ້ມີຢູ່ທົ່ວໄປ, ເປັນແຫຼ່ງທ່ອງທ່ຽວທີ່ຕິດພັນກັບຊີວິດການເປັນຢູ່ຂອງຄົນໃນສັງຄົມ ຊຶ່ງຜູ້ມາຢ້ຽມຢາມຈະໄດ້ຮັບຄວາມຮູ້ໃໝ່ໆທາງດ້ານເຕັກໂນໂລຊີ, ຄວາມສະໜຸກສະໜານ, ຄວາມເພີດເພີນ ແລະ ຄວາມທ້າທາຍ.

4.1.3 ແຫຼ່ງທ່ອງທ່ຽວປະຫວັດສາດ

ໝາຍເຖິງສະຖານທີ່ທີ່ມີການບັນທຶກເຫດການທາງປະຫວັດສາດ ແລະ ມີຄວາມສຳຄັນທາງດ້ານປະຫວັດສາດ ເຮັດໃຫ້ຄົນລຸ້ນປະຈຸບັນມີຄວາມເຂົ້າໃຈກ່ຽວກັບຄວາມເປັນມາ ແລະ ໃຫ້ຄວາມເຄົາລົບນັບຖືເຊັ່ນ: ຫໍພິພິທະພັນ, ອະນຸສອນສະຖານ, ອານຸສາວະລີ, ຫໍໂຮງ, ສະຖານທີ່ເກີດ, ອາໄສ ແລະ ບ່ອນເຮັດວຽກຂອງບຸກຄົນສຳຄັນ, ສະຫນາມຮົບເກົ່າ, ຮ່ອງຮອຍສະໝໍລະພູມ, ເມືອງມໍລະດົກ ແລະ ອື່ນໆ.

5. ການກຳນົດມາດຖານແຫຼ່ງທ່ອງທ່ຽວ

ການກຳນົດມາດຖານແຫຼ່ງທ່ອງທ່ຽວ

ການກຳນົດມາດຖານແຫຼ່ງທ່ອງທ່ຽວໃນເອກະສານສະບັບນີ້ແມ່ນຈະໄດ້ລົງເລິກການກຳນົດມາດຖານສິ່ງອຳນວຍຄວາມສະດວກດ້ານຕ່າງໆທີ່ມີໃນແຫຼ່ງທ່ອງທ່ຽວມາດຖານດັ່ງກ່າວແມ່ນຂະຫຍາຍມາຈາກມາດຖານການທ່ອງທ່ຽວຂອງອາຊຽນ ຊຶ່ງປະເທດສະມາຊິກອາຊຽນຈະຕ້ອງໄດ້ຈັດຕັ້ງປະຕິບັດ ເພື່ອກ້າວໄປສູ່ການອອກໃບຢັ້ງຢືນແຫຼ່ງທ່ອງທ່ຽວທີ່ໄດ້ມາດຖານຕາມກອງເລຂາອາຊຽນກຳນົດອອກດັ່ງນັ້ນຈຶ່ງໄດ້ກຳນົດມາດຖານແຫຼ່ງທ່ອງທ່ຽວ ຂອງ ສປປ ລາວ ດັ່ງນີ້:

1. **ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ**
   - ມີເສັ້ນທາງເຂົ້າເຖິງແຫຼ່ງທ່ອງທ່ຽວທີ່ສະດວກ ແລະ ປອດໄພ.
   - ຕ້ອງມີປ້າຍຊີ້ບອກທາງເຂົ້າແຫຼ່ງທ່ອງທ່ຽວທີ່ພຽງພໍ ແລະ ຈະແຈ້ງ. ນອກຈາກແນະນຳສະຖານທີ່ທ່ອງທ່ຽວແລ້ວຕ້ອງມີຮູບພາບແຫຼ່ງທ່ອງທ່ຽວເພື່ອເປັນສິ່ງດຶງດູດ, ປ້າຍດັ່ງກ່າວຕ້ອງຕິດຕັ້ງກ່ອນ 3 ກິໂລແມັດ ກ່ອນຈະເຖິງແຫຼ່ງທ່ອງທ່ຽວ ແລະ ທາງເຂົ້າແຫຼ່ງທ່ອງທ່ຽວ ກໍ່ຕ້ອງມີປ້າຍຊີ້ບອກຕື່ມພ້ອມທັງມີຮູບພາບແຫຼ່ງທ່ອງທ່ຽວ ເພື່ອໂຄສະນາ.
   - ມີລະບຽບການຂົນສົ່ງພາຍໃນສະຖານທີ່ທ່ອງທ່ຽວ. ມີການກຳນົດການນຳໃຊ້ພາຫະນະໃນບໍລິເວນສະຖານທີ່ທ່ອງທ່ຽວໂດຍເຫດນັ້ນ ໃສ່ການນຳໃຊ້ພາຫະນະພື້ນເມືອງ ຫຼື ພາຫະນະທີ່ບໍ່ສິ່ງຜົນກະທົບຕໍ່ສິ່ງແວດລ້ອມເຊັ່ນ: ລົດສາມລໍ້, ລົດຕຸກໆ, ລົດມ້າ, ລົດຖີບ ຫຼື ຂີ່ຊ້າງ ແລະ ອື່ນໆ.
   - ມີອຸປະກອນການສື່ສານ.
   - ມີຕູ້ຢາປະຈຳສະຖານທີ່ທ່ອງທ່ຽວ.
   - ມີຫ້ອງນ້ຳສະອາດ.

2. **ດ້ານການຍະພາບຂອງແຫຼ່ງທ່ອງທ່ຽວ**
   - ສະຖານທີ່ທ່ອງທ່ຽວຕ້ອງມີເອກະລັກ, ຄວາມໂດດເດັ່ນ ແລະ ສິ່ງດຶງດູດແຕກຕ່າງຈາກບ່ອນອື່ນພາຍໃນປະເທດ ຫຼື ຕ່າງປະເທດໃນດ້ານໃດໜຶ່ງເຮັດໃຫ້ມີຊື່ສຽງດ້ານການທ່ອງທ່ຽວ.
   - ຕ້ອງເປັນສະຖານທີ່ທ່ອງທ່ຽວທີ່ມີທ່າແຮງດ້ານທຳມະຊາດ, ວັດທະນະທຳ ແລະ ປະ
   - ຫວັດສາດ ຫຼື ເປັນສະຖານທີ່ທ່ອງທ່ຽວປະເພດປະສົມປະສານ (ທຳມະຊາດ-ວັດ ທະ

ນະທຳ, ທຳມະຊາດ-ປະຫວັດສາດ, ທຳມະຊາດ-ວັດທະນະທຳ ແລະ ປະຫວັດສາດ) ໂດຍອີງຕາມທ່າແຮງຕົວຈິງຂອງຊັບພະຍາກອນໃນເຂດດັ່ງກ່າວ.

<u>ຕົວຢ່າງ:</u> ສະຖານທີ່ທ່ອງທ່ຽວທຳມະຊາດ-ວັດທະນະທຳ, ທາງດ້ານທຳມະຊາດ ແມ່ນຕາມສະພາບຄວາມເປັນຈິງຂອງທຳມະຊາດເຊັ່ນ: ນ້ຳຕົກ, ຖ້ຳ, ປ່າໄມ້, ປະກົດການທຳມະຊາດທີ່ຊອກຫາເບິ່ງໄດ້ຍາກຄື: ແມງທີ່ງຫ້ອຍ, ແມງກະເບື້ອງທີ່ ຫຼາກຫຼາຍສີສັນ, ສຳລັບວັດທະນະທຳໝາຍເຖິງບ້ານທີ່ເປັນທີ່ຕັ້ງ ຂອງສະຖານທີ່ ທ່ອງທ່ຽວທີ່ມີວິຖີການດຳລົງຊີວິດ, ອາຊີບການທຳມາຫາກິນ, ຮີດຄອງປະເພນີດັ້ງ ເດີມສາມາດສ້າງຄວາມປະທັບໃຈໃຫ້ນັກທ່ອງທ່ຽວ.

3. ການຄຸ້ມຄອງແຫຼ່ງທ່ອງທ່ຽວ

- ໃຫ້ປະຊາຊົນໃນທ້ອງຖິ່ນມີສ່ວນຮ່ວມໃນການພັດທະນາ ແລະ ຄຸ້ມຄອງແຫຼ່ງທ່ອງ ທ່ຽວ.
- ສ້າງວຽກເຮັດງານທຳທີ່ເປັນການສົ່ງເສີມການນຳໃຊ້ຄວາມຮູ້, ທັກສະ ແລະຮີດຄອງ ປະເພນີຂອງປະຊາຊົນໃນທ້ອງຖິ່ນ.
- ມີການປະເມີນຜົນກ່ຽວກັບຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ ແລະ ປະຊາຊົນໃນ ທ້ອງຖິ່ນ.
- ໃຫ້ມີການປະເມີນການຮອງຮັບ, ຄວາມເຂົ້າໃຈກ່ຽວກັບສິ່ງແວດລ້ອມ ແລະ ຄຸນ ຄ່າ ທາງດ້ານວັດທະນະທຳຂອງທ້ອງຖິ່ນ ເພື່ອປ້ອງກັນການເຊື່ອມໂຊມທາງດ້ານສິ່ງ ແວດລ້ອມ ແລະ ເພື່ອຮັບມືກັບເຫດສຸກເສີນດ້ານຕ່າງໆ.
- ມີວິທີການປ້ອງກັນເພື່ອຫຼີກລ້ຽງບໍ່ໃຫ້ນັກທ່ອງທ່ຽວພັກແຮມຢູ່ເຂດທີ່ຫວງຫ້າມ.
- ເກັບກຳຂໍ້ມູນ ຫຼື ສະຖິຕິຂອງນັກທ່ອງທ່ຽວເກັບກຳປະຈຳວັນ ແລ້ວສະຫລຸບເປັນ ເດືອນ, ເປັນປີ.
- ມີການປະເມີນຜົນການພັດທະນາເປັນແຕ່ລະໄລຍະ, ປົກກະຕິ ແລະ ຕໍ່ເນື່ອງເພື່ອ ແກ້ໄຂບັນຫາໃຫ້ທັນການ.

4. ການຄຸ້ມຄອງສິ່ງແວດລ້ອມ

- ອະນຸລັກຮັກສາທຳມະຊາດໃຫ້ຢູ່ໃນສະພາບເດີມເຊັ່ນ: ປ່າໄມ້, ຫ້ວຍນ້ຳລຳເຊ, ສັດ ປ່າທຸກປະເພດ.
- ມີລະບຽບ ຫຼື ຂໍ້ຫ້າມພາຍໃນສະຖານທີ່ທ່ອງທ່ຽວກ່ຽວກັບການອະນຸລັກທຳມະຊາດ.
- ມີການຈັດແບ່ງເຂດ ຫຼື Zoning ພາຍໃນສະຖານທີ່ທ່ອງທ່ຽວເຊັ່ນ: ເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການ.
- ໃຫ້ປະຊາຊົນທີ່ອາໄສຢູ່ໃນພື້ນທີ່ມີສ່ວນຮ່ວມໃນການອະນຸລັກ.

- ກຳນົດຄວາມອາດສາມາດໃນການຮອງຮັບນັກທ່ອງທ່ຽວໃນການບໍລິການ.
- ມີການວາງແຜນຄຸ້ມຄອງສິ່ງແວດລ້ອມ ແລະ ປະເມີນຜົນກະທົບດ້ານຕ່າງໆ.
- ມີການອອກແບບສິ່ງອຳນວຍຄວາມສະດວກທີ່ເຫມາະສົມ, ວັດສະດຸທີ່ນຳໃຊ້ສຳລັບໂຄງລ່າງພື້ນຖານຕ້ອງມີຄວາມກົມກືນກັບສະພາບແວດລ້ອມຂອງທ້ອງຖິ່ນ.
- ລຸດຜ່ອນການກໍ່ສ້າງສິ່ງອຳນວຍຄວາມສະດວກໃຫມ່ທີ່ບໍ່ຈຳເປັນຢູ່ພາຍໃນສະຖານທີ່ທ່ອງທ່ຽວ.
- ສົ່ງເສີມການນຳໃຊ້ອຸປະກອນທີ່ນຳໃຊ້ແລ້ວເອົາກັບມານຳໃຊ້ຄືນໃຫມ່ (3R: Recycle, Reuse, Reduce).
- ມີຖັງຂີ້ເຫຍື້ອ ຫຼື ມີບ່ອນເກັບມ້ຽນຂີ້ເຫຍື້ອທີ່ເຫມາະສົມ ແລະ ພຽງພໍ.
- ບໍລິເວນສະຖານທີ່ທ່ອງທ່ຽວ ຫຼີ້ກລ້ຽງບໍ່ໃຫ້ມີສຽງດັງລົບກວນ.
- ຫຼີ້ກລ້ຽງຜົນກະທົບດ້ານຕ່າງໆທີ່ສິ່ງຜົນກະທົບທາງດ້ານລົບຕໍ່ຄຸນນະພາບຂອງນ້ຳຢູ່ບໍລິເວນແຫຼ່ງທ່ອງທ່ຽວ.
- ມີຂໍ້ກຳນົດກ່ຽວກັບການນຳໃຊ້ທີ່ດິນ.

5. ກິດຈະກຳການທ່ອງທ່ຽວ

- ພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ໃຫ້ຄຳແນະນຳກ່ຽວກັບການຈັດກິດຈະກຳຕ່າງໆ ເພື່ອຫລຸດຜ່ອນຜົນກະທົບທາງດ້ານລົບຕໍ່ສະພາບແວດລ້ອມ.
- ກິດຈະກຳຕ້ອງເຫມາະສົມກັບສະພາບຂອງທ້ອງຖິ່ນ ມີຄວາມເຫມາະສົມກັບຄຸນຄ່າ ແລະ ລັກສະນະຂອງທ້ອງຖິ່ນ, ແທດເຫມາະກັບທ່າແຮງຂອງສະຖານທີ່ທ່ອງທ່ຽວ.

6. ການອະທິບາຍຄວາມຫມາຍ

- ມີຂໍ້ມູນ ຫຼື ມີການອະທິບາຍກ່ຽວກັບສະຖານທີ່ທ່ອງທ່ຽວໂດຍຫຍໍ້.
- ມີພະນັກງານນຳທ່ຽວຂອງທ້ອງຖິ່ນ ຫຼື ພະນັກງານແປພາສາ.
- ມີສິ່ງພິມໂຄສະນາທີ່ຫຼາກຫຼາຍຮູບແບບເພື່ອສື່ສານເຖິງນັກທ່ອງທ່ຽວ.
- ຕ້ອງມີແຜນທີ່ທັງໝົດຂອງສະຖານທີ່ທ່ອງທ່ຽວ ເພື່ອອະທິບາຍຈຸດຕ່າງໆໃຫ້ຜູ້ມາທ່ຽວຊົມ ແຜນທີ່ດັ່ງກ່າວຄວນຕິດຢູ່ຫ້ອງຂໍ້ມູນຂ່າວສານ ຫຼື ກະດານຂ່າວ ແລະ ຕິດຕັ້ງຢູ່ສະຖານທີ່ທ່ອງທ່ຽວ.

7. ດ້ານຄວາມສະຫງົບ ແລະ ຄວາມປອດໄພ

- ມີພະນັກງານປ້ອງກັນຮັກສາຄວາມສະຫງົບ ແລະ ຄວາມປອດໄພຂອງນັກທ່ອງທ່ຽວ.
- ຝຶກອົບຮົມໃຫ້ພະນັກງານເພື່ອກຽມພ້ອມຮັບມືກັບເຫດການສຸກເສີນດ້ານຕ່າງໆ.

- ສະຫນອງຂໍ້ມູນກ່ຽວກັບສະຖານທີ່ທ່ອງທ່ຽວໃຫ້ນັກທ່ອງທ່ຽວຮັບຮູ້ເຊັ່ນ: ເຂດຫວງຫ້າມ, ເຂດອັນຕະລາຍ ແລະ ເຂດທີ່ມີສັດປ່າອາໄສຢູ່.

8. ດ້ານທ່າແຮງ ແລະ ຄວາມພ້ອມ

- ຄວາມພ້ອມຂອງປະຊາຊົນໃນບໍລິເວນແຫຼ່ງທ່ອງທ່ຽວ ແລະ ຢູ່ໃກ້ຄຽງມີຄວາມເຂົ້າໃຈກ່ຽວກັບວຽກງານການທ່ອງທ່ຽວ ແລະ ພ້ອມທີ່ຈະໃຫ້ຄວາມຮ່ວມມືກັບພາກລັດໃນການພັດທະນາການທ່ອງທ່ຽວ ແລະ ບໍລິການນັກທ່ອງທ່ຽວ.
- ປົກປັກຮັກສາອະນຸລັກຊັບພະຍາກອນ ການທ່ອງທ່ຽວປະເພດຕ່າງໆໃນທ້ອງຖິ່ນ ຫຼື ພາຍໃນບ້ານຕົນ.
- ເປັນເຈົ້າຂອງບ້ານທີ່ດີຕ້ອນຮັບນັກທ່ອງທ່ຽວ ແລະ ໃຫ້ການບໍລິການນັກທ່ອງທ່ຽວທີ່ເຂົ້າມາທ່ຽວໃນບ້ານ ຫຼື ທ້ອງຖິ່ນຂອງຕົນ.
- ຮັກສາຄວາມເປັນລະບຽບຮຽບຮ້ອຍຄວາມສະຫງົບພາຍໃນທ້ອງຖິ່ນ.
- ສະຫນອງແຮງງານໃຫ້ຜູ້ມາລົງທຶນໃນການດຳເນີນທຸລະກິດທ່ອງທ່ຽວ.
- ສະຫນອງຜະລິດຕະພັນກະສິກຳ, ອາຫານໃຫ້ຫົວໜ່ວຍບໍລິການຮ້ານອາຫານ, ເພື່ອປຸງແຕ່ງອາຫານສະຫນອງໃຫ້ນັກທ່ອງທ່ຽວ ຫຼື ມີກຸ່ມບໍລິການດັ່ງກ່າວເປັນຂອງບ້ານ.
- ລາຍໄດ້ການທ່ອງທ່ຽວຕ້ອງສາມາດຊ່ວຍສ້າງເສດຖະກິດຂອງທ້ອງຖິ່ນໃຫ້ດີຂຶ້ນ.
- ມີລະບົບການແບ່ງປັນລາຍໄດ້ຈາກການທ່ອງທ່ຽວ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ຮັບປະໂຫຍດຮ່ວມກັນ.

9. ດ້ານການບໍລິການ

- ແຫຼ່ງທ່ອງທ່ຽວຕ້ອງມີໜ່ວຍງານຮັບຜິດຊອບ ຫຼື ມີຜູ້ເຝົ້າຍາມເພື່ອປະສານງານ ແລະ ຊ່ວຍແກ້ໄຂບັນຫາໃນເວລານັກທ່ອງທ່ຽວຕ້ອງການ ຫຼື ມີເຫດສຸກເສີນ.
- ຕ້ອງມີພະນັກງານນຳທ່ຽວປະຈຳແຫຼ່ງທ່ອງທ່ຽວ (ສາມາດນຳໃຊ້ພະນັກງານນຳທ່ຽວຂັ້ນທ້ອງຖິ່ນ ຫຼື ສ້າງຕັ້ງໜ່ວຍບໍລິການນຳທ່ຽວຂັ້ນບ້ານ)
- ນອກຈາກພະນັກງານນຳທ່ຽວແລ້ວຕ້ອງມີກຸ່ມບໍລິການອື່ນໆ. ໃນບ້ານທີ່ຕິດພັນກັບແຫຼ່ງທ່ອງທ່ຽວເຊັ່ນ: ກຸ່ມແຕ່ງກິນ, ກຸ່ມຈັກສານ, ກຸ່ມຫັດຖະກຳຕ່ຳແຜ່ນ, ກຸ່ມຕ້ອນຮັບເຊັ່ນ: ໂຮມສະເຕ, ບາສີສູ່ຂັວນ, ສິນລະປະວັນນະຄະດີ ແລະ ອື່ນໆ.
- ມີຜະລິດຕະພັນທ້ອງຖິ່ນສະຫນອງການບໍລິໂພກຂອງນັກທ່ອງທ່ຽວ ໂດຍສະເພາະແມ່ນດ້ານສະບຽງອາຫານທີ່ເປັນຜະລິດຕະພັນກະສິກຳ.
- ສະຫນອງເຄື່ອງຫັດຖະກຳທີ່ມີຄຸນນະພາບໃຫ້ນັກທ່ອງທ່ຽວ ໃນນີ້ລວມທັງເຄື່ອງປະດັບ, ແຜນແພ, ເຄື່ອງຖັກສານທີ່ແປຮູບເປັນເຄື່ອງໃຊ້ສອຍ, ເຄື່ອງທີ່ລະນຶກ ແລະ

ອື່ນໆ.

- ນອກຈາກການທ່ຽວຊົມແຫຼ່ງທ່ອງທ່ຽວແລ້ວຕ້ອງມີກິດຈະກຳອື່ນເສີມເຊັ່ນ: ສ້າງກິດຈະກຳວັດທະນະທຳ, ການຍ່າງປ່າທ່ຽວຊົມທຳມະຊາດ ແລະ ສັດປ່າ, ທ່ຽວ ຊົມຖ້ຳ, ການຕັ້ງແຄ້ມ, ການລ່ອງເຮືອ, ການລອຍນ້ຳ, ການປີນຜາ ແລະ ອື່ນໆ ໂດຍອີງຕາມທ່າແຮງຂອງຊັບພະ ຍາກອນທີ່ມີ.

6. ຂັ້ນຕອນ ແລະ ວິທີການຈັດສັນແຫຼ່ງທ່ອງທ່ຽວໃນ ສປປລາວ

ຂັ້ນຕອນການຈັດສັນແຫຼ່ງທ່ອງທ່ຽວປະກອບມີ 5 ຂັ້ນຕອນ ຊຶ່ງແຕ່ລະຂັ້ນຕອນຈະໄດ້ແນະນຳລາຍລະອຽດກ່ຽວກັບວິທີການຈັດຕັ້ງປະຕິບັດໃນດ້ານວິຊາການ.

6.1. ການສຳຫຼວດ ແລະ ເກັບກຳຂໍ້ມູນ

6.1.1 ການສຳຫຼວດພື້ນທີ່ ແລະ ການກຳນົດຂອບເຂດເນື້ອທີ່ແຫຼ່ງທ່ອງທ່ຽວ

ການສຳຫຼວດເນື້ອທີ່ໃນເອກະສານສະບັບນີ້ ແມ່ນຈະລົງເລິກສະເພາະການສຳຫຼວດເນື້ອທີ່ແຫຼ່ງທ່ອງທ່ຽວທຳມະຊາດ. ສຳລັບແຫຼ່ງທ່ອງທ່ຽວວັດທະນະທຳ ແລະ ປະຫວັດສາດສ່ວນຫຼາຍຈະມີລາຍລະອຽດຂອງເນື້ອທີ່ ຫຼື ການກຳນົດເນື້ອທີ່, ແບ່ງເຂດ ມາກ່ອນແລ້ວຈາກພາກສ່ວນທີ່ກ່ຽວຂ້ອງແຕ່ຂັ້ນຕອນການສຳຫຼວດແມ່ນຄ້າຍຄືກັນ.

ການສຳຫຼວດເນື້ອທີ່ແຫຼ່ງທ່ອງທ່ຽວທຳມະຊາດ ປະກອບມີ 4 ຂັ້ນຕອນຄື: 1). ການກະກຽມອຸປະກອນສຳລັບການລົງສຳຫຼວດ; 2). ການສຶກສາຂໍ້ມູນເນື້ອທີ່ແຫຼ່ງທ່ອງທ່ຽວໃນແຜນທີ່; 3). ການລົງສຳຫຼວດເນື້ອທີ່ແຫຼ່ງທ່ອງທ່ຽວ; ແລະ 4). ການເອົາຂໍ້ມູນລົງໃສ່ແຜນທີ່ທ່ອງທ່ຽວ ລາຍລະອຽດແຕ່ລະຂັ້ນຕອນມີດັ່ງນີ້:

6.1.1.1 ການກະກຽມອຸປະກອນຮັບໃຊ້ການສຳຫຼວດ

- ພາຫະນະໃນການເດີນທາງ (ລົດ, ເຮືອ) ອີງຕາມຄວາມເໝາະສົມຂອງພື້ນທີ່.
- ແຜນທີ່ແຫຼ່ງທ່ອງທ່ຽວທີ່ກ່ຽວຂ້ອງ.
- ອຸປະກອນວັດແທກ ແລະ ເກັບກຳຂໍ້ມູນ (GPS, ແມັດກ້ຳ ຫຼື ເຄື່ອງເລເຊີ້ວັດລະດັບ).
- ອຸປະກອນສຳລັບການເກັບກຳຂໍ້ມູນ, ຮູບພາບ (ກ້ອງຖ່າຍຮູບ, ກ້ອງຖ່າຍວີດີໂອ).
- ອຸປະກອນຮັບໃຊ້ສຳລັບນັກສຳຫຼວດ (ອາຫານ, ນ້ຳດື່ມ, ຢາປົວພະຍາດ, ເກີບໂບກ,ເກີບບັງຕຸບ, ເສື້ອກັນຝົນ, ຖ້າເປັນປ່າຕຶບຕ້ອງກະກຽມມີດພ້າ ເພື່ອຖາງທາງ ແລະ ອື່ນໆ).

6.1.1.2 ການສຶກສາຂໍ້ມູນເນື້ອທີ່ແຫຼ່ງທ່ອງທ່ຽວໃນແຜນທີ່

ກ່ອນການລົງສຳຫຼວດເນື້ອທີ່ຕົວຈິງທີມງານສຳຫຼວດ ຕ້ອງໄດ້ສຶກສາຂໍ້ມູນແຫຼ່ງທ່ອງທ່ຽວໃນແຜນທີ່ ເພື່ອເປັນພື້ນຖານຮ່ວມກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຂະແໜງທີ່ດິນ, ຂະແໜງກະສິກຳປ່າໄມ້, ອຳນາດການປົກຄອງທີ່ກ່ຽວຂ້ອງຂັ້ນບ້ານ, ເມືອງ,

ແຂວງ. ການສຶກສາຂໍ້ມູນໃນແຜນທີ່ແມ່ນຕ້ອງການຢາກຮູ້ຂອບເຂດການສຳຫຼວດທັງໝົດ ແລະ ຂອບເຂດແຫຼ່ງທ່ອງທ່ຽວເບື້ອງຕົ້ນທີ່ກຳນົດໃນແຜນທີ່ (ຖ້າມີ), ຖ້າແຜນທີ່ບໍ່ທັນໄດ້ກຳນົດຂອບເຂດແຫຼ່ງທ່ອງທ່ຽວທີມງານຈະໄດ້ກຳນົດໃນແຜນທີ່ໄວ້ເປັນພື້ນຖານ.

ສຶກສາຂໍ້ມູນເບື້ອງຕົ້ນໃນແຜນທີ່ 1/100,000 ຫຼື 1/5000 ໃນການສຶກສາແຜນທີ່ຈະຕ້ອງເບິ່ງແຜນທີ່ລວມວ່າ: ເນື້ອທີ່ທັງໝົດທີ່ຈະສຳຫຼວດມີເທົ່າໃດ, ຈຸດທີ່ຕັ້ງຂອງເນື້ອທີ່ຈະສຳຫຼວດນັ້ນຢູ່ໃນແຜນທີ່ເທົ່າໃດ, ເສັ້ນແວງເທົ່າໃດ ແລະ ເສັ້ນຂະໜານທີເທົ່າໃດ, ສະພາບເນື້ອທີ່ມີລັກສະນະເປັນເນື້ອທີ່ຮາບພຽງ ຫຼື ເປັນພູສູງ, ມີແມ່ນ້ຳ ຫຼື ຫ້ວຍຮ່ອງ, ມີລະດັບໜ້າດິນແຕກຕ່າງກັນຫຼາຍໜ້ອຍຊ່ຳໃດ, ມີຄວາມສູງຈາກລະດັບໜ້ານ້ຳທະເລຫຼາຍປານໃດ, ມີປ່າໄມ້ປົກຄຸ້ມຫຼາຍສ່ຳໃດ.

ແຜນທີ່ມາດຕາສ່ວນ 1/100.000

- ກຳນົດຂອບເຂດແຫຼ່ງທ່ອງທ່ຽວໃນແຜນທີ່

ເນື້ອທີ່ສຳຫຼວດເບື້ອງຕົ້ນນັ້ນຕ້ອງສຶກສາແຜນທີ່ກ່ອນວ່າເນື້ອທີ່ທີ່ຈະໄປສຳຫຼວດກວມເອົາຂອບເຂດໃດແດ່, ປະເມີນເນື້ອທີ່ມີຈັກເຮັກຕາ ໃນແຜນທີ່ມາດຕາສ່ວນ 1/100.000 ນັ້ນ 1 ຕາກາໂລ ເທົ່າກັບ 100 ເຮັກຕາ ແລະ ສັງເກດລາຍລະອຽດເນື້ອທີ່ທັງໝົດທີ່ຈະກຳນົດເປັນແຫຼ່ງທ່ອງທ່ຽວມີເທົ່າໃດ ໃຫ້ກຳນົດໃນແຜນທີ່ໄວ້ເປັນຂໍ້ມູນພື້ນຖານ.

6.1.1.3 ລົງສຳຫຼວດເນື້ອທີ່ແຫຼ່ງທ່ອງທ່ຽວ

ປົກກະຕິຂອງການສຳຫຼວດເນື້ອທີ່ແມ່ນມີຂອບເຂດກ້ວາງຂວາງ ເພື່ອຮັບປະກັນດ້ານເຕັກນິກການສຳຫຼວດເນື້ອທີ່ຕົວຈິງໄດ້ແບ່ງອອກສອງວຽກຄື: ການສຳຫຼວດເນື້ອທີ່ຂອບເຂດລວມ ແລະ ການສຳຫຼວດສະພາບກາຍຍະພາບຂອງຊັບພະຍາກອນໃນແຫຼ່ງທ່ອງທ່ຽວ.

- ການສຳຫຼວດເນື້ອທີ່ຂອບເຂດ ແມ່ນການເດີນສຳຫຼວດຊອກຫາຈຸດຂອບເຂດເນື້ອທີ່ແຫຼ່ງທ່ອງທ່ຽວນຳໃຊ້ເຄື່ອງ GPS ຈັບຈຸດພິກັດແຕ່ລະແຈຂອງເນື້ອທີ່ດິນພ້ອມທັງກຳນົດເສັ້ນຂອບເຂດລົງໃນ GPS.
- ການສຳຫຼວດສະພາບກາຍຍະພາບຂອງ ຊັບພະຍາກອນໃນແຫຼ່ງທ່ອງທ່ຽວ ແມ່ນການສຳຫຼວດ ເບິ່ງລັກສະນະພູມສັນຖານຂອງແຫຼ່ງທ່ອງທ່ຽວ ແລະ ສຳຫຼວດເບິ່ງແຕ່ລະຈຸດຂອງແຫຼ່ງທ່ອງທ່ຽວມີຊັບພະຍາກອນແນວໃດ? ສຳຫຼວດລັກສະນະພູມສັນຖານ: ພູມອາກາດ, ອຸນະພູມ, ຄວາມຊຸ່ມສຳພັດ, ປະລິມານນ້ຳຝົນ, ເນື້ອທີ່ປ່າແຕ່ລະປະເພດ, ລະດັບຄວາມຄ້ອຍຊັນຂອງໜ້າດິນ.

  ສຳຫຼວດຊັບພະຍາກອນ: ປະເພດພືດ, ປະເພດຕົ້ນໄມ້, ສັດປ່າທີ່ມີ, ແມ່ນ້ຳ, ແກ້ງ, ພູຜາ, ຖ້ຳ, ເນື້ອທີ່ກະສິກຳຂອງຊາວບ້ານ ແລະ ແຫຼ່ງປະຫວັດສາດຕ່າງໆ ຂໍ້ມູນເລົ່ານີ້ຈະໄດ້ບັນທຶກເຂົ້າໃນອຸປະກອນການສຳຫຼວດ GPS.

6.1.1.4 ການສຶກສາວິເຄາະຂໍ້ມູນ ແລະ ການລົງຂໍ້ມູນໃນແຜນທີ່

ການສຶກສາຂໍ້ມູນພາບຖ່າຍດາວທຽມການລົງສຳຫຼວດພື້ນທີ່ຕົວຈິງແມ່ນອາໄສການຍ່າງສຳຫຼວດ ເພື່ອວັດແທກກຳນົດຂອບເຂດຕົວຈິງຂອງພື້ນທີ່ຊຶ່ງໄດ້ສຶກສາໃນແຜນທີ່ກ່ອນການລົງສຳຫຼວດ, ການສຳຫຼວດດັ່ງກ່າວຊ່ວຍໃຫ້ນັກສຳຫຼວດໄດ້ເຫັນຕົວຈິງຂອບເຂດຂອງແຫຼ່ງທ່ອງທ່ຽວ, ພູມີປະເທດ, ສະພາບທຳມະຊາດ, ຊ່ວຍໃຫ້ການກຳນົດແບ່ງເຂດມີຄວາມລະອຽດ.

ແຕ່ການສັງເກດດ້ວຍຕາເປົ່າໃນພື້ນທີ່ກ້ວາງຂວາງບໍ່ສາມາດເຮັດໄດ້ໃນເວລາທີ່ສັ້ນ, ຕ້ອງໄດ້ມີການສຶກສາຂໍ້ມູນເພີ່ມເຕີມຫຼາຍຢ່າງ. ດັ່ງນັ້ນ, ຈຶ່ງໄດ້ໃຊ້ພາບຖ່າຍດາວທຽມເຂົ້າມາຊ່ວຍ, ພາບຖ່າຍທາງດາວທຽມເຮັດໃຫ້ເຮົາສັງເກດເຫັນສະພາບພື້ນທີ່ທັງໝົດທີ່ກຳນົດໃນແຜນທີ່ໃນເວລາດຽວກັນໄດ້ຊັດເຈນຂຶ້ນເຊັ່ນ: ການປົກຄຸມຂອງປ່າ, ເສັ້ນທາງ, ແມ່ນ້ຳ ແລະ ຫ້ວຍຕ່າງໆ.

- **ການວິເຄາະ, ຕີລາຄາຂໍ້ມູນສະພາບພື້ນທີ່ແຫຼ່ງທ່ອງທ່ຽວ**

ພາຍຫຼັງການສຳຫຼວດເກັບ ຂໍ້ມູນຕ່າງໆໃນແຫຼ່ງທ່ອງທ່ຽວ, ຕ້ອງມີການວິເຄາະຂໍ້ມູນຕ່າງໆ ແລະ ໃຫ້ມີຄຳອະທິບາຍສະພາບຂອງແຫຼ່ງທ່ອງທ່ຽວເຊັ່ນ:

- ຂອບເຂດເນື້ອທີ່ມີຈຳນວນເທົ່າໃດ ທີ່ເຫັນວ່າເໝາະສົມເພື່ອພັດທະນາເປັນແຫຼ່ງທ່ອງທ່ຽວ?

- ໃນຂອບເຂດພື້ນທີ່ມີແຫຼ່ງທ່ອງທ່ຽວຈັກຈຸດ ຫຼື ຈັກແຫ່ງ?
- ແຫຼ່ງທ່ອງທ່ຽວປະເພດໃດ (ທຳມະຊາດ, ປະຫັວດສາດ, ວັດທະນະທຳ) ແລະ ສາມາດເຊື່ອມຕໍ່ກັນແນວໃດ? ໄລຍະຫ່າງລະຫວ່າງຈຸດຫນຶ່ງຫາອີກຈຸດຫນຶ່ງມີເທົ່າໃດ?
- ແຫຼ່ງທ່ອງທ່ຽວທຳມະຊາດໃຫ້ສຶກສາລັກສະນະຂອງເນື້ອທີ່ເປັນຄືແນວໃດ? (ພູສູງ ຊັນ, ພູພຽງ, ທົ່ງພຽງ, ປ່າຕຶບ, ປ່າໂຄກ, ຄວາມສູງຈາກລະດັບໜ້ານ້ຳທະເລ).
- ພູມອາກາດຂອງພື້ນທີ່ໃນແຕ່ລະລະດູການ.
- ຊັບພະຍາກອນທຳມະຊາດທີ່ມີ (ປະເພດຕົ້ນໄມ້, ສັດປ່າ, ຫ້ວຍນ້ຳ, ນ້ຳຕົກຕາດ, ຖ້ຳ).
- ການກຳນົດແບ່ງເຂດພາຍໃນແຫຼ່ງທ່ອງທ່ຽວ.
- ຈາກສະພາບພູມີປະເທດສາມາດກຳນົດແນວຄວາມຄິດທີ່ເປັນກິດຈະກຳດ້ານການທ່ອງທ່ຽໄດ້ຈຳນວນໜຶ່ງ.

- **ລົງຂໍ້ມູນຈາກ GPS ລົງໃສ່ Mapsource ແລະ GIS**

ພາຍຫຼັງການເກັບກຳຂໍ້ມູນຂອບເຂດຕ່າງໆ ທີ່ໄດ້ຈາກການສຳຫຼວດ, ຕ້ອງໄດ້ອະທິບາຍແຕ່ລະຈຸດໃຫ້ລະອຽດ, ຂໍ້ມູນທີ່ເກັບກຳໃນເຄື່ອງ GPS ຈຶ່ງໄດ້ຖືກຍັນທຶກລົງໃສ່ Map source ນັ້ນເຮົາຈະສາມາດເຫັນຂອບເຂດທີ່ກຳນົດນັ້ນຢູ່ໃນພາບຖ່າຍດາວທຽມຈາກ Google Earth.





ການເອົາຂໍ້ມູນຈາກ GPS ລົງໃສ່ GIS ນັ້ນເຮົາຈະສາມາດກຳນົດຂອບເຂດລົງໃສ່ໃນແຜນທີ່ຂອງກົມແຜນທີ່ແຫ່ງຊາດ.



6.1.1.5 ການແບ່ງເຂດ ຫຼື Zoning

ການກຳນົດແບ່ງເຂດ ຫຼື Zoning ແມ່ນເພື່ອກຳນົດໃຫ້ຮູ້ລະອຽດເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການ. ໂດຍອີງຕາມການສຳຫຼວດສະພາບ ພື້ນທີ່ຕົວຈິງ ແລະ ຄວາມເໝາະສົມ, ທ່າແຮງ ແລະ ການສຶກສາທາງດ້ານວິຊາການບົນພື້ນຖານ ຄວາມເປັນເອກະພາບຂອງຄະນະທີມງານຈັດສັນ ແຫຼ່ງທ່ອງທ່ຽວ.

ການແບ່ງເຂດພັດທະນາແຫຼ່ງທ່ອງທ່ຽວ



- **ເຂດອະນຸລັກ**

ເປັນເຂດທີ່ບໍ່ອະນຸຍາດໃຫ້ມີການປຸກສ້າງສິ່ງອຳນວຍຄວາມສະດວກດ້ານຕ່າງໆ ແຕ່ສາມາດປັບປຸງບູລະນະໄດ້ເຊັ່ນ: ການເຮັດອະນາໄມສິ່ງກີດຂວາງເພື່ອອະນຸລັກເຂດດັ່ງກ່າວໃຫ້ຢູ່ໃນສະພາບເດີມ ແລະ ມີຄວາມສວຍງາມ.

ການກຳນົດເຂດອະນຸລັກຕ້ອງກຳນົດຈຳນວນເນື້ອທີ່ອະນຸລັກລະອຽດ, ກຳນົດຈຸດໄລຍະຫ່າງລະຫວ່າງເຂດອະນຸລັກຫາເຂດສະຫງວນ ຫຼື ເຂດບໍລິການຕົວຢ່າງ: ເຂດອະນຸລັກໃນບໍລິເວນພະທາດຫຼວງວຽງຈັນ ກຳນົດສິ່ງປຸກສ້າງແມ່ນຕ້ອງຢູ່ຫ່າງຈາກບໍລິເວນດັ່ງກ່າວ 60 ແມັດ ເຂດອະນຸລັກຢູ່ຖ້ຳປະຫວັດສາດທ່ານຜູ້ນຳເມືອງ ວຽງໄຊບໍ່ອະນຸຍາດໃຫ້ມີສິ່ງປຸກສ້າງຢູ່ຕໍ່ໜ້າຖ້ຳ.

- **ເຂດກັນຊົນ**

ແມ່ນເຂດພື້ນທີ່ອ້ອມຂ້າງ ຫຼື ຕິດພັນກັບແຫຼ່ງທ່ອງທ່ຽວ ຊຶ່ງມີຂອບເຂດເນື້ອທີ່ຈຳກັດໂດຍບໍ່ອະນຸຍາດໃຫ້ມີສິ່ງປຸກສ້າງໃດໆທັງໝົດ, ກຳນົດເພື່ອປົກປັກຮັກສາເຂດອະນຸລັກ.

- **ເຂດສະຫງວນ**

ແມ່ນເຂດທີ່ສະຫງວນໄວ້ ສຳລັບການພັດທະນາກິດຈະການໃດໜຶ່ງສະເພາະ, ສາມາດກໍ່ສ້າງສິ່ງອຳນວຍຄວາມສະດວກແຕ່ຕ້ອງໄດ້ກຳນົດ ແລະ ໄດ້ຮັບອະນຸຍາດ.

<u>ຕົວຢ່າງ:</u> ຈຸດຊົມວິວ, ບ່ອນຕັ້ງແຄ້ມ, ຫ້ອງການພະນັກງານ, ຈຸດແວ່ເຊົາຂອງນັກທ່ອງທ່ຽວພາຍໃນແຫຼ່ງທ່ອງທ່ຽວ. ສິ່ງກໍ່ສ້າງຕ້ອງມີຄວາມເປັນເອກະລັກສະເພາະ ແລະ ມີຄວາມກົມກືນກັບສະພາບແວດລ້ອມໃນພື້ນທີ່.

- **ເຂດບໍລິການ**

ແມ່ນເຂດທີ່ສາມາດປຸກສ້າງສິ່ງອຳນວຍຄວາມສະດວກຕ່າງໆໄດ້ເຊັ່ນ: ຮ້ານອາຫານ, ຮ້ານຂາຍເຄື່ອງທີລະນຶກ, ຫ້ອງຂໍ້ມູນຂ່າວສານ ຫຼື ກະດານຂ່າວ, ບ່ອນຈອດລົດ, ຫ້ອງນ້ຳສາທາລະນະ, ບ່ອນຂາຍປີ້ ແລະ ອື່ນໆ. ແຕ່ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ແລະ ມີການຈັດສັນຢ່າງເປັນລະບົບ, ປຸກສ້າງໃຫ້ມີຄວາມເປັນລະບຽບ, ສວຍງາມ ແລະ ມີຄວາມກົມກືນກັບສະພາບຂອງພື້ນທີ່.



ຮູບຕົວຢ່າງ: ການແບ່ງຂອບເຂດໃນການພັດທະນາແຫຼ່ງທ່ອງທ່ຽວ

6.1.2 ການສຳຫຼວດສະພາບເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ

ການສຳຫຼວດ, ເກັບກຳຂໍ້ມູນທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມແມ່ນ ເພື່ອເປັນຂໍ້ມູນກ່ຽວກັບທ່າແຮງໃນການພັດທະນາ ແລະ ຄວາມຕ້ອງການຂອງແຫຼ່ງທ່ອງທ່ຽວ ແລະ ບໍລິເວນທີ່ໃກ້ຄຽງ. ການເກັບກຳຂໍ້ມູນດ້ານດັ່ງ ກ່າວແມ່ນໄດ້ມາຈາກ ເອກະສານແຜນພັດທະນາຂອງເມືອງ, ບົດສະຫລຸບປະຈຳປີຂອງເມືອງ, ນຳໃຊ້ແບບຟອມສອບຖາມ-ສຳພາດ (ລະອຽດໄດ້ຕິດຄັດມາພ້ອມນີ້) ແລະ ຈາກການສັງເກດການຂອງວິຊາການຈັດສັນແຫຼ່ງທ່ອງທ່ຽວໃນເວລາລົງເກັບກຳຂໍ້ມູນຕົວຈິງ ການເກັບກຳຂໍ້ມູນໃນແຕ່ລະດ້ານຄວນມີຂໍ້ມູນທີ່ຈຳເປັນດັ່ງລາຍລະອຽດລຸ່ມນີ້:

6.1.2.1 ດ້ານເສດຖະກິດ

- ອາຊີບຕົ້ນຕໍ ແລະ ສຳຮອງຂອງປະຊາຊົນ, ສະເລ່ຍລາຍຮັບ/ຫຼັງຄາເຮືອນ/ປີ
- ຈຳນວນຄົວເຮືອນທີ່ຫຼຸດພົ້ນອອກຈາກຄວາມທຸກຍາກຄອບຄົວທີ່ຍັງທຸກຍາກ.
- ການຜະລິດທີ່ຂາຍເປັນສິນຄ້າເຊັ່ນ: ຜະລິດເຄື່ອງຫັດຖະກຳ, ເຄື່ອງກະສິກຳ ແລະ ອື່ນໆ.
- ຈຳນວນ ແລະ ທ່າອ່ຽງຂອງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດທີ່ມາທ່ຽວ (ສົມທຽບໃນປີຜ່ານມາວ່າເພີ່ມຂຶ້ນ ຫຼື ລຸດລົງ) ຍ້ອນສາເຫດຫຍັງ.
- ຄວາມຕ້ອງການຂອງນັກທ່ອງທ່ຽວ.
- ລາຍຮັບຈາກການທ່ອງທ່ຽວທີ່ປະຊາຊົນໄດ້ຮັບເຊັ່ນ: ຂາຍປີ້ເຂົ້າຊົມ, ພະນັກງານນຳທ່ຽວ ແລະ ອື່ນໆ.
- ການສ້າງວຽກເຮັດງານທຳໃຫ້ປະຊາຊົນໃນທ້ອງຖິ່ນ ໄດ້ປະກອບສ່ວນດ້ານໃດແດ່ (ຖ້າເປັນໄປໄດ້ສຶກສາເບິ່ງລາຍຮັບຕໍ່ເດືອນ ຫຼື ຕໍ່ປີ).
- ຈຳນວນສະຖານທີ່ພັກເຊົາຂອງນັກທ່ອງທ່ຽວ ແລະ ສິ່ງອຳນວຍຄວາມສະດວກດ້ານຕ່າງໆເຊັ່ນ: ໂຮງແຮມ, ເຮືອນພັກ, ຣີສອດ, ຮ້ານອາຫານ, ຮ້ານບັນເທີງ, ຮ້ານຂາຍເຄື່ອງ ແລະ ອື່ນໆຢູ່ບໍລິເວນແຫຼ່ງທ່ອງທ່ຽວ ແລະ ເຂດໃກ້ຄຽງ.

6.1.2.2 ດ້ານວັດທະນະທຳ-ສັງຄົມ

- ຈຳນວນປະຊາກອນ, ແຍກເພດຊາຍ-ຍິງ, ບ້ານ, ຄອບຄົວທີ່ຢູ່ບໍລິເວນແຫຼ່ງທ່ອງທ່ຽວ ແລະ ເຂດໃກ້ຄຽງ.
- ຈຳນວນຊົນເຜົ່າ, ຊົນເຜົ່າໃດແດ່, ມີບຸນປະເພນີປະຈຳປີ ຫຼື ບໍ່, ຖ້າມີຈັດໃນຊ່ວງເດືອນໃດຂອງປີ.
- ລະບົບພື້ນຖານໂຄງລ່າງຂອງບໍລິເວນແຫຼ່ງທ່ອງທ່ຽວເຊັ່ນ: ລະບົບໄຟຟ້າ, ນ້ຳ

ປະປາ, ການສື່ສານ, ເສັ້ນທາງເຂົ້າເຖິງ, ໂຮງໝໍ ຫຼື ສຸກສາລາ, ໂຮງຮຽນ, ຄວາມ ປອດໄພຂອງ ສັງຄົມ.

- ການອະນຸລັກຮັກສາວັດທະນາທຳ ຮີດຄອງປະເພນີຂອງປະຊາຊົນທ້ອງຖິ່ນ.
- ຜະລິດຕະພັນທ່ອງທ່ຽວ ແລະ ອື່ນໆ.

6.1.2.3 ດ້ານສິ່ງແວດລ້ອມ

- ສະພາບທົ່ວທັດທຳມະຊາດຂອງແຫຼ່ງທ່ອງທ່ຽວ.
- ສະພາບດິນຟ້າອາກາດ, ເຂດດັ່ງກ່າວເຄີຍຖືກນ້ຳຖ້ວມບໍ່.
- ແຫຼ່ງທ່ອງທ່ຽວຍັງຄົງຮັກສາສະພາບເດີມຫຼື ເຄີຍຖືກບູລະນະສ້ອມແປງແລ້ວ.
- ເນື້ອທີ່ແຫຼ່ງທ່ອງທ່ຽວອຸດົມສົມບູນໄປດ້ວຍຊີວະນາໆພັນ, ຍັງເປັນເຂດເນື້ອທີ່ປ່າສີຂຽວ, ມີສັດປ່າທີ່ຫາຍາກ ຫຼື ໃກ້ຈະສູນພັນ, ພືດພັນຊະນິດຕ່າງໆ, ຕົ້ນໄມ້ທີ່ເປັນຢາປົວພະຍາດ.
- ການອະນຸລັກຮັກສາທຳມະຊາດ, ລະບົບການບຳບັດນ້ຳເປື້ອນ ແລະ ການ ກຳຈັດຂີ້ເຫຍື້ອ.
- ເຂດເນື້ອທີ່ແຫຼ່ງທ່ອງທ່ຽວດັ່ງກ່າວມີການປົກປັກຮັກສາ, ປ້ອງກັນການບຸກ ລຸກການຈັບຈ່ອງທີ່ດິນແນວໃດ ແລະ ການຕັດໄມ້ທຳລາຍປ່າ.
- ຄວາມອາດສາມາດໃນການຮອງຮັບນັກທ່ອງທ່ຽວໃນແຫຼ່ງທ່ອງທ່ຽວເພື່ອຫຼີ້ກ ລ້ຽງການທຳລາຍສິ່ງແວດລ້ອມ.

6.2. ການວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ (SWOT Analysis)

	ດ້ານດີ	ດ້ານອ່ອນ
ພາຍໃນ	ຈຸດແຂງ (Strength)	ຈຸດອ່ອນ (Weakness)
ພາຍນອກ	ໂອກາດ (Opportunity)	ສິ່ງທ້າທາຍ (Threat)

ແມ່ນການວິເຄາະກ່ຽວກັບປັດໄຈດ້ານຕ່າງໆຂອງແຫຼ່ງທ່ອງທ່ຽວທັງພາຍໃນ ແລະ ພາຍນອກ ເພື່ອວິເຄາະເບິ່ງບັນດາດ້ານດີ ແລະ ດ້ານອ່ອນຂອງແຫຼ່ງທ່ອງທ່ຽວມີຫຍັງແດ່. ປັດໄຈພາຍໃນແມ່ນສິ່ງທີ່ສາມາດຄວບຄຸມໄດ້ຊຶ່ງລວມມີທັງຈຸດແຂງ ແລະ ຈຸດອ່ອນ, ສ່ວນ ປັດໄຈພາຍນອກແມ່ນສິ່ງທີ່ບໍ່ສາມາດຄວບຄຸມໄດ້ຊຶ່ງລວມມີໂອກາດ ແລະ ສິ່ງທ້າທາຍ.

- **ການວິເຄາະສະພາບແວດລ້ອມພາຍໃນ**

ແມ່ນການວິເຄາະອົງປະກອບທັງຫມົດ ຂອງລະບົບການທ່ອງທ່ຽວທັງຈຸດແຂງ ແລະ ຈຸດອ່ອນເຊັ່ນ:

o **ຈຸດແຂງ** (Strength)

ຫມາຍເຖິງຈຸດແຂງ ຫຼື ທ່າແຮງທີ່ມີເຊັ່ນ: ສະເຖຍລະພາບທາງດ້ານການເມືອງ ຂອງປະເທດ, ນະໂຍບາຍຈາກລັດຖະບານ, ຊັບພະຍາກອນດ້ານບຸກຄະລາກອນທີ່ມີ ຄວາມສາມາດ, ມີທັກສະ, ມີທີມງານທີ່ເຂັ້ມແຂງ, ມີທີມງານທີ່ມີຄວາມສາມາດໃນ ການວິເຄາະ ແລະ ພັດທະນາຜະລິດຕະພັນທ່ອງທ່ຽວ, ມີເຄື່ອງມືອຸປະກອນທີ່ທັນສະ ໄຫມ, ມີງົບປະມານຮັບໃຊ້, ມີການບໍລິຫານຄຸ້ມຄອງທີ່ດີ ແລະ ອື່ນໆ.

<u>ຕົວຢ່າງ ຈຸດແຂງ</u>

- ສະເຖຍລະພາບທາງດ້ານການເມືອງຂອງປະເທດມີຄວາມໝັ້ນຄົງ ແລະ ມີຄວາມ ສະຫງົບສຸກ.
- ນະໂຍບາຍຂອງລັດຖະບານ ໄດ້ສະໜັບສະໜູນອຸດສາຫະກຳການທ່ອງທ່ຽວ ແລະ ການປົກຮັກສາສິ່ງແວດລ້ອມ.
- ທ່າອ່ຽງການຂະຫຍາຍຕົວຂອງການທ່ອງທ່ຽວລະດັບປະເທດ ແລະ ພາກພື້ນຢູ່ລະ ດັບທີ່ດີ.
- ຄວາມສົນໃຈຂອງນັກທ່ອງທ່ຽວຕໍ່ສະຖານທີ່ທ່ອງທ່ຽວມີໃນລະດັບສູງ.
- ວັດທະນະທຳຮີດຄອງປະເພນີ ຂອງທ້ອງຖິ່ນໄດ້ເປັນສິ່ງທີ່ດຶງດູດໃຈນັກທ່ອງທ່ຽວ.

o **ຈຸດອ່ອນ** (Weakness)

ຫມາຍເຖິງຈຸດອ່ອນພາຍໃນເຊັ່ນ: ຂາດພື້ນຖານໂຄງລ່າງທີ່ຈຳເປັນ, ຂາດປະສົບ ການໃນການບໍລິຫານຄຸ້ມຄອງ ບຸກຄະລາກອນຂາດປະສົບການກ່ຽວກັບການໂຄສະນາ ສິ່ງເສີມການຕະຫຼາດ, ທີມງານບໍ່ເຂັ້ມແຂງ, ພະນັກງານບໍ່ມີກຳລັງໃຈໃນການເຮັດວຽກ, ອຸປະກອນຮັບໃຊ້ບໍ່ພຽງພໍ, ອຸປະກອນບໍ່ທັນສະໄຫມ ແລະ ອື່ນໆ.

<u>ຕົວຢ່າງຈຸດອ່ອນ</u>

- ພື້ນຖານໂຄງລ່າງ ທີ່ອຳນວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວຍັງມີຫນ້ອຍ.
- ຄວາມຮັບຮູ້ຂອງສັງຄົມຕໍ່ຊັບພະຍາກອນທຳມະຊາດ ແລະ ວັດທະນະທຳທີ່ເປັນທ່າ ແຮງດ້ານການທ່ອງທ່ຽວຍັງຢູ່ໃນຂອບເຂດຈຳກັດ.

- ຄວາມຮັບຮູ້ຂອງພາກສ່ວນກ່ຽວຂ້ອງຕໍ່ກັບຫລັກການ ຂອງການຈັດສັນແຫຼ່ງທ່ອງທ່ຽວຍັງຢູ່ໃນຂອບເຂດຈຳກັດ.
- ຂາດປະສົບການໃນການບໍລິຫານ ແລະ ຄຸ້ມຄອງການທ່ອງທ່ຽວ.
- ທຶນຮອນສຳລັບການບໍລິຫານ ແລະ ຄຸ້ມຄອງການທ່ອງທ່ຽວຍັງຈຳກັດ.
- ຂາດມາດຕະຖານ, ລະບຽບການ, ໃນການຄຸ້ມຄອງດູແລກ່ຽວກັບການຈັດສັນຢູ່ໃນແຕ່ລະແຫຼ່ງທ່ອງທ່ຽວນັ້ນໆ, ການຈັດຕັ້ງປະຕິບັດລະບຽບທີ່ມີແລ້ວນັ້ນຍັງບໍ່ທັນເຂັ້ມງວດ.
- ການປະສານງານກັບອົງການຈັດຕັ້ງ ແລະກົມກອງທີ່ຮັບຜິດຊອບດ້ານຕ່າງໆກ່ຽວກັບການທ່ອງທ່ຽວຍັງບໍ່ທັນຄ່ອງຕົວ.

- **ການວິເຄາະສະພາບແວດລ້ອມພາຍນອກ**

ແມ່ນການວິເຄາະດ້ານດີ ແລະ ດ້ານອ່ອນຂອງປັດໄຈພາຍນອກທີ່ສົ່ງຜົນກະທົບຕໍ່ການທ່ອງທ່ຽວເຊັ່ນ:

o **ໂອກາດ (Opportunity)**

ຫມາຍເຖິງໂອກາດທີ່ຈະໄດ້ຮັບການສະຫນັບສະຫນູນໃນດ້ານຕ່າງໆເຊັ່ນ: ການສົ່ງເສີມຜະລິດຕະພັນການທ່ອງທ່ຽວ, ການລຸດຜ່ອນພາສີຂາເຂົ້າວັດຖຸດິບ ຫຼື ຜະລິດຕະພັນທີ່ມາຮັບໃຊ້ໃນຂະແຫນງການທ່ອງທ່ຽວ, ມີຊ່ອງຫວ່າງທາງດ້ານການຕະຫຼາດ, ມີເຄືອຄ່າຍທາງດ້ານຜະລິດຕະພັນການທ່ອງທ່ຽວ ແລະ ອື່ນໆ.

<u>**ຕົວຢ່າງໂອກາດ**</u>

- ພັດທະນາເສດຖະກິດທີ່ເຊື່ອມໂຍງກັບການອະນຸລັກຊີວະນາໆພັນ.
- ການພັດທະນາຜະລິດຕະພັນການທ່ອງທ່ຽວໃນທ້ອງຖິ່ນ.
- ເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນພາຍໃນທ້ອງຖິ່ນ.
- ການຮ່ວມມືກັບສາກົນໃນການອະນຸລັກຊີວະນາໆພັນ, ການສົ່ງເສີມການຕະຫລາດການທ່ອງທ່ຽວ.
- ການທ່ອງທ່ຽວເປັນເລື່ອງທີ່ດຶງດູດຄວາມສົນໃຈ ຂອງນັກລົງທຶນ ແລະ ຜູ້ທີ່ຈະໃຫ້ທຶນຈາກທົ່ວໂລກ.

o **ສິ່ງທ້າທາຍ (Threats)**

ຫມາຍເຖິງອຸປະສັກທີ່ເກີດຈາກພາຍນອກ ຊຶ່ງບໍ່ສາມາດຄວບຄຸມໄດ້ ເຊັ່ນ: ລາຄານ້ຳມັນຖີບຕົວຂຶ້ນສູງ, ການຂາດແຄນນ້ຳມັນຮັບໃຊ້, ອັດຕາເງິນເຟີ້ ຫຼື ການລຸດຄ່າເງິນກີບ, ຕົ້ນທຶນໃນການຊື້ວັດຖຸດິບທີ່ນຳເຂົ້າຈາກຕ່າງປະເທດສູງຂຶ້ນ, ສົງຄາມ, ການແຜ່ລະບາດຂອງພະຍາດ, ໄພທຳມະຊາດ ແລະ ອື່ນໆ.

ຕົວຢ່າງສິ່ງທ້າທາຍ

- ສົງຄາມການກໍ່ການຮ້າຍສາກົນ
- ເສດຖະກິດຂອງໂລກຕົກຕ່ຳ, ລາຄານ້ຳມັນຂຶ້ນສູງ
- ອາດເກີດມີຄວາມຂັດແຍ້ງລະຫວ່າງຂະແໜງການອຸດສາຫະກຳ ແລະ ຂະແໜງການອື່ນ (ດັ່ງນັ້ນມັນຈຶ່ ຮຽກຮ້ອງໃຫ້ມີການປະສານງານ ແລະ ຈັດສັນແຫຼ່ງທ່ອງທ່ຽວນັ້ນ ເພື່ອຄວາມເປັນເອກະພາບ ເພື່ອຮັບປະກັນໃຫ້ການນຳໃຊ້ຊັບພະຍາກອນມີຄວາມສອດຄ່ອງ ແລະ ເໝາະສົມ)
- ການແຜ່ລະບາດຂອງເຊື້ອໂລກເຊັ່ນ: ໂລກຊາຣສ ແລະ ອື່ນໆ.

6.3. ກຳນົດກິດຈະກຳການທ່ອງທ່ຽວພາຍໃນແຫຼ່ງທ່ອງທ່ຽວ

ການກຳນົດກິດຈະກຳ ດ້ານການທ່ອງທ່ຽວເຂົ້າໃສ່ແຫຼ່ງທ່ອງທ່ຽວ ແຕ່ລະປະເພດ ແມ່ນ ເພື່ອເຮັດໃຫ້ກິດຈະກຳທີ່ກຳນົດໃສ່ແຫຼ່ງທ່ອງທ່ຽວ ເໝາະສົມກັບທ່າແຮງຂອງແຫຼ່ງທ່ອງທ່ຽວ, ສາມາດດຳເນີນການບໍລິການໄດ້, ດັ່ງນັ້ນ, ກິດຈະກຳທີ່ກຳນົດໃສ່ແຫຼ່ງທ່ອງທ່ຽວແຕ່ລະປະເພດຕ້ອງໃຫ້ແທດເໝາະກັບທ່າແຮງຂອງມັນດັ່ງທີ່ໄດ້ກຳນົດໃນຂໍ້ທີ 4 ພາກທີ II ຂອງບົດແນະນຳສະບັບນີ້ກ່ຽວກັບການກຳນົດເງື່ອນໄຂຂອງແຫຼ່ງທ່ອງທ່ຽວ ແຕ່ລະປະເພດ. ແຫຼ່ງທ່ອງທ່ຽວແຕ່ລະປະເພດກໍ່ຍັງແບ່ງປະເພດສະເພາະຂອງມັນ. ດັ່ງນັ້ນ, ການກຳນົດກິດຈະກຳໃຫ້ຖືກຕ້ອງຄວນຈະມີການພິຈາລະນາທ່າແຮງຂອງແຫຼ່ງທ່ອງທ່ຽວ, ຄວາມພ້ອມໃນການບໍລິການ ແລະ ຕະຫຼາດໄປພ້ອມໆກັນ.

6.3.1 ການກຳນົດກິດຈະກຳຢູ່ແຫຼ່ງທ່ອງທ່ຽວທຳມະຊາດ

ແຫຼ່ງທ່ອງທ່ຽວທຳມະຊາດໄດ້ແຍກເປັນ 3 ປະເພດຄື: 1). ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີສະພາບເດີມບໍ່ມີການດັດແປງ, 2). ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີການດັດແປງ, ປຸງແຕ່ງແຕ່ຍັງຮັກສາສະພາບເດີມ, 3). ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີການດັດແປງ ແລະ ກໍ່ສ້າງເພີ້ມເຕີມ.

6.3.1.1 ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີສະພາບເດີມບໍ່ມີການດັດແປງເປັນແຫຼ່ງທ່ອງທ່ຽວທຳມະຊາດທີ່ບໍ່ທັນມີການພັດທະນາ: ແຫຼ່ງທ່ອງທ່ຽວກຸ່ມນີ້ສ່ວນຫຼາຍຕັ້ງຢູ່ຫ່າງໄກສ່ວນຫຼາຍມີພູຜາສູງຊັນຍັງມີສະພາບທຳມະຊາດທີ່ອຸດົມສົມບູນ, ມີປະລິມານການທ່ອງທ່ຽວບໍ່ຫຼາຍ, ການຄວບຄຸມການຈັດການກ່ຽວກັບການທ່ອງທ່ຽວບໍ່ຄ່ອຍມີສາເຫດຍ້ອນການເຂົ້າເຖິງບໍ່ສະດວກ ຫຼື ບາງແຫ່ງບໍ່ມີເສັ້ນທາງໄປເຖິງ, ແຫຼ່ງທ່ອງທ່ຽວທຳມະຊາດ ດັ່ງກ່າວນີ້ສ່ວນໜຶ່ງກໍ່ເປັນປ່າສະຫງວນແຫ່ງຊາດ.

ແຫຼ່ງທ່ອງທ່ຽວປະເພດນີ້ເໝາະສຳລັບກິດຈະກຳ ການຮຽນຮູ້ຈາກທຳມະຊາດໂດຍກົງເຊັ່ນ: ການຍ່າງປ່າ (Hiking), ການປີນຜາ, ການສຶກສາທຳມະຊາດ (Nature study), ການເບິ່ງນົກ (Bird Watching) ແລະ ເບິ່ງສັດປ່າອື່ນໆ (Wildlife viewing), ການຕັ້ງແຄມພັກແຮມ (Wilderne sscamping), ການພາຍເຮືອ (Canoeing), ການລອຍນ້ຳ (Swimming) ແລະ ການພັກຜ່ອນຢ່ອນໃຈໃນບັນຍາກາດທີ່ຫງຽບສະຫງົບ Relaxing. ປະສົບການທີ່ນັກທ່ອງທ່ຽວຈະໄດ້ຮັບຈາກແຫຼ່ງທ່ອງທ່ຽວດັ່ງກ່າວແມ່ນຄວາມສະຫງົບ, ໄດ້ຫາຍໃຈເອົາອາກາດທີ່ສົດຊື່ນປາດສະຈາກສານພິດ, ໄດ້ສຳພັດ ແລະ ຮຽນຮູ້ກ່ຽວກັບທຳມະຊາດດ້ວຍຕົນເອງ, ການອອກກຳລັງກາຍ ແລະ ການສະແດງອອກໃນຄວາມເປັນຕົວຂອງຕົນເອງຂອງບັນດານັກທ່ອງທ່ຽວທີ່ມັກການພະຈົນໄພ,

6.3.1.2 ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີການດັດແປງ, ປຸງແຕ່ງແຕ່ຍັງຮັກສາສະພາບເດີມ: ໃນ ສປປ ລາວ ແຫຼ່ງທ່ອງທ່ຽວທຳມະຊາດປະເພດນີ້ ເກືອບທັງໝົດແມ່ນຢູ່ໃນປ່າສະຫງວນທີ່ຢູ່ໃນພື້ນທີ່ໃກ້ຄຽງກັບບ້ານປະຊາຊົນ, ແຫຼ່ງທ່ອງທ່ຽວກຸ່ມນີ້ ກໍ່ຍັງມີສະພາບແວດລ້ອມທີ່ດີແຕ່ເປັນພື້ນທີ່ທຳມະຊາດທີ່ພັດທະນາ ປັບປຸງ ແລະ ປ່ຽນແປງເພື່ອອຳນວຍຄວາມສະດວກ, ຕອບສະໜອງໃຫ້ການບໍລິການທ່ອງທ່ຽວການເຂົ້າເຖິງແມ່ນມີຄວາມສະດວກທັງທາງບົກ ແລະ ທາງນ້ຳ, ການບໍລິການທ່ອງທ່ຽວ ແລະ ການຈັດການບໍລິຫານ ດ້ານການທ່ອງທ່ຽວແມ່ນມີຫຼາຍ, ບາງແຫ່ງກໍ່ເປັນລະບົບມາດຖານສົມຄວນມີສິ່ງອຳນວຍຄວາມສະດວກພາຍໃນແຫຼ່ງທ່ອງທ່ຽວເຊັ່ນ: ຈຸດຊົມວິວ, ບ່ອນຖິ້ມຂີ້ເຫຍື້ອ, ຫ້ອງນ້ຳ, ຮ້ານອາຫານ, ຮ້ານຈຳໜ່າຍເຄື່ອງທີ່ລະນຶກ, ຫ້ອງຂໍ້ມູນຂ່າວສານ ຫຼື ກະດານຂ່າວ, ປ້າຍຊີ້ບອກຕ່າງໆຊຶ່ງການອອກແບບສິ່ງອຳນວຍຄວາມສະດວກ ໃນແຫຼ່ງທ່ອງທ່ຽວແມ່ນມີຄວາມກົມກືນກັບທຳມະຊາດ.

ກິດຈະກຳໃນແຫຼ່ງທ່ອງທ່ຽວແຫຼ່ງທ່ອງທ່ຽວທຳມະຊາດ ທີ່ມີການດັດແປງ, ປຸງແຕ່ງແຕ່ຍັງຮັກສາສະພາບເດີມ, ກິດຈະກຳທີ່ເໝາະສົມສຳລັບແຫຼ່ງທ່ອງທ່ຽວປະເພດນີ້ກໍ່ມີລັກສະນະຄ້າຍຄືກັນ, ນອກນັ້ນກໍ່ມີກິດຈະກຳທີ່ຄວນກຳນົດຕື່ມເຊັ່ນ: ເຮືອນພັກຢູ່ເທິງຕົ້ນໄມ້, ການຂີ່ສະລິ, ການຊົມວິວ, ການພັກເຊົາບ້ານປະຊາຊົນ (Homestay), ຕົກເບັດ, ຂີ່ເຮືອ, ລ່ອງແພ, ການຕັ້ງແຄມ, ນັກທ່ອງທ່ຽວທີ່ໄດ້ສຳພັດແຫຼ່ງທ່ອງທ່ຽວປະເພດນີ້ຈະໄດ້ຮັບຄວາມສະດວກໃນການບໍລິການ ແລະ ໄດ້ເຫັນທຳມະຊາດໄປຄຽງຄູ່ກັບວິຖີຊີວິດຂອງປະຊາຊົນທີ່ອາໄສໃນບໍລິເວນ ດັ່ງກ່າວຊຶ່ງເປັນລາຍການທ່ອງທ່ຽວທີ່ຄຸ້ມຄ່າ ແລະ ນັກທ່ອງທ່ຽວຈະ

ສື່ສານບອກຕໍ່ໃຫ້ກຸ່ມນັກທ່ອງທ່ຽວອື່ນໆ, ນັກທ່ອງທ່ຽວທີ່ມາທ່ອງທ່ຽວໃນແຫຼ່ງທ່ອງທ່ຽວປະເພດນີ້ມີເປີເຊັນກັບມາທ່ອງທ່ຽວແຫ່ງດັ່ງກ່າວສູງສົມຄວນ.

6.3.1.3 ແຫຼ່ງທ່ອງທ່ຽວທຳມະຊາດທີ່ມີການດັດແປງແລະກໍ່ສ້າງເພີ່ມເຕີມ: ເປັນແຫຼ່ງທ່ອງທ່ຽວພັດທະນາແລ້ວ (Developed Natural) ມີການຈັດກິດຈະກຳຕອບສະໜອງຄວາມຕ້ອງການ ສິ່ງອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວສ່ວນຫຼາຍແມ່ນເປັນປະເພດລີຊອດ (Resort), ກິດຈະກຳໃນແຫຼ່ງທ່ອງທ່ຽວປະເພດດັ່ງກ່າວນີ້ເປັນລາຍການມາດຖານທີ່ໄດ້ກຳນົດ ໂດຍເຈົ້າຂອງສະຖານທີ່ ຫຼື ຜູ້ສຳປະທານຊຶ່ງສ່ວນຫຼາຍກໍ່ແມ່ນການທ່ຽວຊົມທຳມະຊາດ, ທ່ຽວສວນຢາສະໝຸນໄພ ຫຼື ຕົ້ນໄມ້ທຳມະຊາດ, ສວນສັດ, ການຕົກເບັດ, ຂີ່ເຮືອ, ລ່ອງແພ, ການຕັ້ງແຄມ, ກິດຈະກຳບາງອັນກໍ່ແມ່ນກິດຈະກຳທີ່ກຳນົດໃນຂໍ້ 5.3.1.1 ແລະ 5.3.1.2 ແຕ່ມີຄວາມສະດວກ ແລະ ຮັບປະກັນຄວາມປອດໄພສູງໂດຍທີ່ນັກທ່ອງທ່ຽວບໍ່ເສຍເວລາຫຼາຍ ແຕ່ໄດ້ເຮັດ ຫຼາຍກິດຈະກຳ.

ສຳລັບແຫຼ່ງທ່ອງທ່ຽວທຳມະຊາດທີ່ມະນຸດສ້າງຂຶ້ນໂດຍການຈຳລອງ ນັ້ນມີການບໍລິຫານຈັດການທີ່ເປັນລະບົບ ແລະ ມີກິດຈະກຳສະເພາະສ່ວນຫຼາຍກໍ່ຈະເປັນຮູບແບບດຽວກັນ.

6.3.2 ການກຳນົດກິດຈະກຳໃນແຫຼ່ງທ່ອງທ່ຽວວັດທະນະທຳ

ແຫຼ່ງທ່ອງທ່ຽວວັດທະນະທຳແບ່ງເປັນ 3 ປະເພດຄື : 1). ແຫຼ່ງທ່ອງທ່ຽວວັດທະນະທຳປະເພດວິຖີຊີວິດ 2). ແຫຼ່ງທ່ອງທ່ຽວວັດທະນະທຳພື້ນເມືອງ, 3). ແຫຼ່ງກິດຈະກຳປະກອບອາຊີບສູນວິໄຈ, ສູນການຄ້າ, ສວນສະໜຸກ, ສະຖານບັນເທີງ, ແລະ ສະຖານີທົດລອງການກຳນົດກິດຈະກຳໃນແຫຼ່ງທ່ອງທ່ຽວວັດທະນະທຳມີດັ່ງນີ້:

6.3.2.1 ແຫຼ່ງທ່ອງທ່ຽວວັດທະນະທຳປະເພດວິຖີຊີວິດ: ແຫຼ່ງທ່ອງທ່ຽວດັ່ງກ່າວນີ້ແມ່ນບ້ານຊົນເຜົ່າ, ບ້ານຫັດຖະກຳພື້ນເມືອງ, ຕ່ຳຫູກ, ຈັກສານ, ການຜະລິດສິນຄ້າຈາກຜະລິດຕະພັນກະສິກຳ, ຈັດກິດຈະກຳໃຫ້ນັກທ່ອງທ່ຽວໄດ້ເຮັດກິດຈະກຳຮ່ວມກັບປະຊາຊົນເຊັ່ນ: ການພັກເຊົານຳປະຊາຊົນ, ການແຕ່ງອາຫານພື້ນເມືອງ, ການສາທິດການຕ່ຳຫູກ, ຈັກສານ, ການເຂົ້າຮ່ວມກິດຈະກຳດ້ານກະສິກຳເຊັ່ນ: ການດຳນາ, ການກ່ຽວເຂົ້າຫຼືເກັບກ່ຽວຜົນລະປູກ, ເກັບຊາ, ເກັບກາເຟອື່ນໆ. ນອກນັ້ນຄວນຈັດໃຫ້ມີກິດຈະກຳດ້ານວັດທະນະທຳເຊັ່ນ: ການຂັບລຳ ແລະ ຟ້ອນພື້ນເມືອງໃຫ້ນັກທ່ອງທ່ຽວໄດ້ຟັງ ແລະ ໄດ້ເບິ່ງທັງໄດ້ຮ່ວມກິດຈະກຳນຳອີກ. ຜູ້ມາຢ້ຽມຊົມໄດ້ສັງເກດເຫັນຄວາມເປັນຢູ່ແລະວິຖີຊີວິດຂອງປະຊາ

ຊົນໃນທ້ອງຖິ່ນດ້ວຍຕົນເອງ ແລະ ມີສ່ວນຮ່ວມໃນກິດຈະກຳກັບຊຸມຊົນຊຶ່ງແຫຼ່ງທ່ອງທ່ຽວປະເພດນີ້ສ່ວນຫຼາຍແມ່ນຢູ່ແຖບຊົນນະບົດຮ່ຳໆໄກຈາກຕົວເມືອງ.

6.3.2.2 ແຫຼ່ງທ່ອງທ່ຽວວັດທະນະທຳພື້ນເມືອງ: ເປັນສະຖານທີ່ບູຮານສະຖານ, ວັດວາອາຮາມ, ອາຄານບ້ານເຮືອນ, ສິນລະປະວັນນະຄະດີ, ນິທັດສະການ, ເທດສະການ, ງານບຸນ ແລະ ພິທີກຳຕ່າງໆ ຊຶ່ງແຫຼ່ງທ່ອງທ່ຽວປະເພດດັ່ງກ່າວມີກິດຈະກຳສະເພາະທີ່ເປັນເອກະລັກ ຫຼື ເປັນປະເພນີຂອງແຕ່ລະງານ ໂດຍສະເພາະແມ່ນເທດສະການເຊັ່ນ: ປີໃໝ່ລາວ, ບຸນອອກພັນສາ, ບຸນເຂົ້າພັນສາ, ພິທີກຳທາງສາດສະໜາອື່ນໆ, ພຽງແຕ່ພວກເຮົາກຳນົດກິດຈະກຳທີ່ມີແລ້ວໃສ່ໃນປະຕິທິນທ່ອງທ່ຽວ, ໂຄສະນາໃຫ້ນັກທ່ອງທ່ຽວຮັບຊາບ.

6.4.2.3 ແຫຼ່ງກິດຈະກຳປະກອບອາຊີບ: ເຊັ່ນ: ສູນວິໄຈ, ສູນການຄ້າ, ສວນສະໜຸກ, ສະຖານບັນເທີງ , ແລະ ສະຖານທີ່ທົດລອງ ແຫຼ່ງທ່ອງທ່ຽວດັ່ງກ່າວນີ້ມີຢູ່ທົ່ວໄປ, ກິດຈະກຳຕົ້ນຕໍກໍ່ແມ່ນການທັດສະນະສຶກສາຮຽນຮູ້, ການຄົ້ນຄວ້າວິໄຈ, ການທ່ຽວຊົມແຫຼ່ງທ່ອງທ່ຽວເຫຼົ່ານີ້ຕິດພັນກັບຊີວິດການເປັນຢູ່ຂອງຄົນໃນສັງຄົມ ຊຶ່ງຜູ້ມາຢ້ຽມຢາມຈະໄດ້ຮັບຄວາມຮູ້ໃໝ່ໆ ທາງດ້ານເຕັກໂນໂລຊີເຕັກໂນໂລຊີ, ຄວາມສະໜຸກສະໜານ, ຄວາມເພີດເພີນ ແລະ ຄວາມທ້າທາຍ.

6.3.3 ການກຳນົດກິດຈະກຳໃນແຫຼ່ງທ່ອງທ່ຽວປະຫວັດສາດ

ແຫຼ່ງທ່ອງທ່ຽວປະຫວັດສາດເປັນສະຖານ ທີ່ທີ່ມີການບັນທຶກເຫດການທາງປະຫວັດສາດເຊັ່ນ: ຫໍພິພິດທະພັນ, ອະນຸສອນສະຖານ, ອານຸສາວະລີ, ສິ່ງປຸກສ້າງຫໍໂຮງ, ສະຖານທີ່ເກີດ ຫຼື ອາໄສ, ຖ້ຳ ແລະ ບ່ອນເຮັດວຽກຂອງບຸກຄົນສຳຄັນ, ຮ່ອງຮອຍສະໝໍລະພູມ, ເມືອງມໍລະດົກ.

ອານຸສາວະລີ

ຫໍພິພິດຕະພັນ ໄກສອນ ພົມວິຫານ

ຖ້ຳທ່ານຜູ້ນຳເມືອງວຽງໄຊ

ນັກທ່ອງທ່ຽວທີ່ມີເປົ້າໝາຍມາຢ້ຽມຢາມແຫຼ່ງທ່ອງທ່ຽວ ດັ່ງກ່າວແມ່ນ ເພື່ອຢາກຮູ້ປະຫວັດຄວາມເປັນມາຂອງສະຖານທີ່ ຫຼື ເຫດການທີ່ເກີດຂຶ້ນໃນອາດີດກັບຜູ້ຄົນທີ່ດຳລົງຊີວິດໃນສະຖານທີ່ດັ່ງກ່າວ. ດັ່ງນັ້ນ, ກິດຈະກຳໃນແຫຼ່ງທ່ອງທ່ຽວປະຫັວດສາດ ແມ່ນການທ່ຽວຊົມແຫຼ່ງທ່ອງທ່ຽວ, ຟັງການເລົ່າຄືນປະຫວັດຂອງສະຖານທີ່ ແລະເຫດການທີ່ເກີດຂຶ້ນ, ການຊົມພາບ ຫຼື ສາຍວີດີໂອບັນທຶກພາບ ຫຼື ການຈຳລອງເຫດການປະຫວັດສາດໃນອາດີດ.

ແຫຼ່ງທ່ອງທ່ຽວປະຫວັດສາດ ບາງແຫ່ງເປັນໄດ້ທັງແຫຼ່ງທ່ອງທ່ຽວວັດທະນະທຳ ເຊັ່ນ: ຫຼວງພະບາງເມືອງມໍລະດົກໂລກເປັນຕົ້ນ ດັ່ງນັ້ນ, ກິດຈະກຳການບໍລິການອື່ນໆໃນແຫຼ່ງທ່ອງທ່ຽວປະຫວັດສາດ ກໍ່ມີການບໍລິການທົ່ວໄປເຊັ່ນ: ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ການຂີ່ລົດຖີບທ່ຽວຊົມເມືອງ ຫຼື ສະຖານທີ່ບູຮານນະສະຖານ, ການຂີ່ເຮືອຊົມເມືອງ (ຖ້າສະຖານທີ່ຕັ້ງແຄມນ້ຳ), ການນຳໃຊ້ພາຫະນະບໍລິການນັກທ່ອງທ່ຽວ ໃນແຫຼ່ງທ່ອງທ່ຽວປະຫວັດສາດຄວນປະຍຸກຄືນພາຫະນະ ທີ່ມີໃນສະໄໝກ່ອນເຊັ່ນ : ກວຽນ, ລົດສາມລໍ້, ມ້າ, ຂີ່ຊ້າງ ແລະ ອື່ນໆ ເພື່ອດຶງດູດນັກທ່ອງທ່ຽວ ແລະ ໄດ້ບັນຍາກາດຂອງເມືອງປະຫັວດສາດ.

6.4 ການສ້າງບົດລາຍງານ ແລະ ຂໍການຮັບຮອງເອກະສານການຈັດສັນແຫຼ່ງທ່ອງທ່ຽວ

ບົດລາຍງານເປັນເອກະສານອ້າງອີງທີ່ສຳຄັນ ເພື່ອໃຫ້ຄະນະກຳມະການຈັດສັນແຫຼ່ງທ່ອງທ່ຽວໄດ້ຮັບຮູ້ຂໍ້ມູນທີ່ເປັນເອກະພາບກ່ຽວກັບຂອບເຂດເນື້ອທີ່ແຫຼ່ງທ່ອງທ່ຽວ ແລະແນວຄວາມຄິດການພັດທະນາ ທີ່ສອດຄ່ອງກັບສະພາບຂອງພື້ນທີ່ແຫຼ່ງທ່ອງທ່ຽວດັ່ງກ່າວ. ບົດລາຍງານສຸດທ້າຍຈະຖືກຮັບຮອງ ຈາກຄະນະຮັບຜິດຊອບຊີ້ນຳການຈັດສັນແຫຼ່ງທ່ອງທ່ຽວຂັ້ນແຂວງ.

<u>ຮ່າງບົດລາຍງານການຈັດສັນແຫຼ່ງທ່ອງທ່ຽວມີດັ່ງນີ້:</u>

I. ພາກສະເໜີ

II. ສະພາບທົ່ວໄປຂອງແຫຼ່ງທ່ອງທ່ຽວ

1. ທີ່ຕັ້ງ, ຂອບເຂດເນື້ອທີ່
2. ສະພາບເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມໃນບໍລິເວນແຫຼ່ງທ່ອງທ່ຽວ
3. ສະພາບດ້ານການທ່ອງທ່ຽວ
   3.1 ພາຍໃນແຫຼ່ງທ່ອງທ່ຽວ

3.1.1 ການຄຸ້ມຄອງ ແລະ ການນຳໃຊ້ແຫຼ່ງທ່ອງທ່ຽວ

3.1.2 ສະພາບໂຄງສ້າງດ້ານການບໍລິການ

3.1.3 ການຄົມມະນາຄົມຂົນສົ່ງ/ການເຂົ້າເຖິງແຫຼ່ງທ່ອງທ່ຽວ

3.1.4 ກິດຈະກຳການທ່ອງທ່ຽວທີ່ມີພາຍໃນແຫຼ່ງທ່ອງທ່ຽວ

3.2 ສະພາບດ້ານການທ່ອງທ່ຽວໃນເຂດພາຍນອກ ແລະ ເຂດໃກ້ຄຽງແຫຼ່ງທ່ອງ ທ່ຽວ

3.2.1 ສະພາບໂຄງສ້າງດ້ານການບໍລິການພາຍນອກແຫຼ່ງທ່ອງທ່ຽວ

3.2.2 ການຄົມມະນາຄົມຂົນສົ່ງພາຍນອກແຫຼ່ງທ່ອງທ່ຽວ

3.2.3 ຜະລິດຕະພັນການທ່ອງທ່ຽວທີ່ມີໃນບໍລິເວນພາຍນອກ ແລະ ເຂດໃກ້ຄຽງ

3.2.4 ກິດຈະກຳການທ່ອງທ່ຽວ, ການສ້າງເຄືອຄ່າຍຜະລິດ ແລະ ສະຫນອງຜະ ລິດຕະພັນການທ່ອງທ່ຽວ

3.2.5 ການເຊື່ອມໂຍງກັບແຫຼ່ງທ່ອງທ່ຽວອື່ນໆ

3.2.6 ຕະຫຼາດນັກທ່ອງທ່ຽວ

III. ການວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ (SWOT Analysis)

ຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍການວະເຄາະຈຸດດີ, ຈຸດອ່ອນແມ່ນວິ ເຄາະດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມຍົກໃຫ້ເຫັນໂອກາດໃນ ການພັດທະນາການລົງທຶນ ແລະ ການຕະຫຼາດ ແລະ ສິ່ງທ້າທາຍທີ່ຈະເກີດຂຶ້ນ.

IV. ທິດທາງໃນການພັດທະນາແຫຼ່ງທ່ອງທ່ຽວ

1. ວິໄສທັດ, ເປົ້າຫມາຍ ແລະ ຈຸດປະສົງ
2. ການກຳນົດແບ່ງເຂດພາຍໃນແຫຼ່ງທ່ອງທ່ຽວ
3. ການກຳນົດກິດຈະກຳພາຍໃນແຫຼ່ງທ່ອງທ່ຽວ

ໃນບົດລາຍງານຕ້ອງອະທິບາຍລະອຽດກ່ຽວກັບໂຄງສ້າງໃນການພັດທະນາ ແລະ ປັບປຸງພາຍໃນ ແຫຼ່ງ ທ່ອງທ່ຽວ.

3.1 ກຳນົດເປັນກິດຈະກຳພາຍໃນແຫຼ່ງທ່ອງທ່ຽວເຊັ່ນ: ການຍ່າງປ່າ, ຈຸດຊົມວິວ, ການເບິ່ງນົກ ແລະ ສັດປ່າ, ການຂີ່ຊ້າງ, ຂີ່ລົດຖີບ, ຂີ່ເຮືອ, ລອຍນ້ຳ, ປີນຜາ, ຂີ່ສະລິງ, ການຕັ້ງແຄມ ແລະ ອື່ນໆ ແລະ ບັນດາກິດຈະກຳເຫຼົ່ານັ້ນຈະຖືກລະບຸ ລະອຽດໃນແຜນທີ່ຂອງແຫຼ່ງທ່ອງທ່ຽວຕາມເຂດຕ່າງໆເຊັ່ນ: ເຂດສະຫງວນ, ເຂດບໍ ລິການສຳລັບເຂດອະນຸລັກແມ່ນມີພຽງການປັບປຸງບູລະນະໃຫ້ຢູ່ໃນສະພາບເດີມ.

3.2 ກິດຈະກຳພາຍນອກແຫຼ່ງທ່ອງທ່ຽວ ແມ່ນໃຫ້ເບິ່ງຕາມທ່າແຮງຂອງຊຸມຊົນບາງ ບ່ອນເຂົາ ເຈົ້າອາດມີກິດຈະກຳມາແລ້ວພຽງແຕ່ໄປສິ່ງເສີມ ແລະ ປັບປຸງຊ່ວຍໃຫ້ ເຂົາເຈົ້າສາມາດສ້າງເປັນເຄືອຄ່າຍຜະລິດຕະພັນການທ່ອງທ່ຽວເຊັ່ນ: ການຕຳໜູກ, ຈັກສານ, ການກະສິກຳແປຮູບອາຫານແຫ້ງ, ການຜະລິດເຄື່ອງທີ່ລະນຶກການ

ຍ້ອມຜ້າສີທຳມະຊາດ, ການບໍລິການເຮືອນພັກ (Homestay), ການບໍລິການອາຫານ, ການບໍລິການນຳທ່ຽວເຫຼົ່ານີ້ເປັນຕົ້ນ.

4. ແຜນງານ, ໂຄງການພັດທະນາແຫຼ່ງທ່ອງທ່ຽວ
5. ຜູ້ມີສ່ວນຮ່ວມໃນການພັດທະນາ
6. ໂຄງສ້າງການຄຸ້ມຄອງ (ບຸກຄະລະກອນ, ຄະນະກຳມະການຄຸ້ມຄອງແຫຼ່ງທ່ອງທ່ຽວ)
7. ກົນໄກການສ້າງກອງທຶນພັດທະນາແຫຼ່ງທ່ອງທ່ຽວ (ການເກັບປີ້ເຂົ້າຊົມ, ສ້າງກອງທຶນບໍລິການຕ່າງໆເພື່ອໃຫ້ມີງົບປະມານສະໜັບສະໜູນການພັດທະນາແຫຼ່ງທ່ອງທ່ຽວແທນທີ່ຈະອາໃສທຶນຈາກລັດຖະບານຢ່າງດຽວ).

ເອກະສານບົດລາຍງານຂ້າງເທິ່ງນີ້ ແມ່ນຈະຖືກຮັບຮອງຈາກອຳນາດການປົກຄອງແຂວງ (ເຈົ້າແຂວງ ຫຼື ຮອງເຈົ້າແຂວງຜູ້ຊີ້ນຳວຽກງານທ່ອງທ່ຽວ) ຊຶ່ນຳສະເໜີໂດຍພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ. ພາຍຫຼັງບົດລາຍງານໄດ້ຖືກຮັບຮອງແລ້ວພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງຕ້ອງນຳສະເໜີເຖິງພະແນກການທີ່ກ່ຽວຂ້ອງຂອງແຂວງເຊັ່ນ: ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຂະແໜງການທີ່ດິນ) ເພື່ອອອກເອກະສານຢັ້ງຢືນຂອບເຂດຂອງແຫຼ່ງທ່ອງທ່ຽວທີ່ໄດ້ກຳນົດໃນບົດລາຍງານ ເພື່ອເປັນບ່ອນອີງໃນການປັກຫຼັກໝາຍ.

6.5 ການປັກຫຼັກໝາຍພື້ນທີ່ແຫຼ່ງທ່ອງທ່ຽວ

ການປັກຫຼັກໝາຍພື້ນທີ່ເຂດທ່ອງທ່ຽວ ແມ່ນຂັ້ນຕອນສຸດທ້າຍຂອງການຈັດສັນແຫຼ່ງທ່ອງທ່ຽວ, ຂອບເຂດການປັກຫຼັກໝາຍຈະຖືກກຳນົດຈຳນວນ ພື້ນທີ່ໃນບົດລາຍງານຂ້າງເທິງ. ຫຼັກໝາຍເຂດແດນ ແຫຼ່ງທ່ອງທ່ຽວແມ່ນຫຼັກຊີເມັນຂະໜາດ 12x12 ຊັງຕີແມັດ ສູງ 2 ແມັດ, ຝັງລົງດິນປະມານ 50 ຊັງຕີແມັດ ແລະ ເສົາຈະສູງພົ້ນໜ້າດິນ 1,5 ແມັດ, ຫົວເສົາເປັນສີຟ້າທີ່ເປັນສັນຍາລັກຂອງເຂດແດນແຫຼ່ງທ່ອງທ່ຽວໄລຍະຫ່າງຂອງເສົາແມ່ນ 300 ແມັດຕໍ່ 1 ເສົາສຳລັບເຂດແຫຼ່ງທ່ອງທ່ຽວທີ່ຢູ່ໃກ້ກັບເຂດປ່າຜະລິດ ແລະ 500 ແມັດ ຕໍ່ ເສົາໃນເຂດປ່າສະຫງວນ.



ຮູບຕົວຢ່າງ:ເສົາປັ້ກໝາຍຂອບເຂດແຫຼ່ງທ່ອງທ່ຽວ

ພາກທີ III: ໂຄງປະກອບ ແລະ ພາລະບົດບາດຂອງຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ

1. ໂຄງປະກອບ ແລະ ພາລະບົດບາດຂອງຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວຂັ້ນສູນກາງ.

ຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວຂັ້ນສູນກາງ ປະກອບມີດັ່ງລຸ່ມນີ້:

1. ທ່ານ ລັດຖະມົນຕີຊ່ວຍວ່າການກະຊວງ ຖວທ ເປັນຫົວໜ້າ
2. ທ່ານ ຫົວໜ້າກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ເປັນຮອງ
3. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າກົມມໍລະດົກ, ກະຊວງ ຖວທ ເປັນຄະນະ
4. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ
5. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າກົມສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ
6. ທ່ານ ຫົວໜ້າກົມ ຫຼື ຮອງຫົວໜ້າກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ
7. ທ່ານ ຫົວໜ້າກົມ ຫຼື ຮອງກົມເຄຫາຜັງເມືອງ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ
8. ທ່ານ ຫົວໜ້າຫ້ອງການ, ກະຊວງປ້ອງກັນປະເທດ ເປັນຄະນະ
9. ທ່ານ ຫົວໜ້າ ຫຼື ຮອງ ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ

ພາລະບົດບາດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວຂັ້ນ ສູນກາງ

- ແຕ່ງຕັ້ງກອງເລຂາ, ຄະນະວິຊາການ ໃນການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ
- ຊີ້ນຳການປະສານງານ, ກວດກາ, ສັງລວມ, ຕີລາຄາ, ການຈັດສັນແຫຼ່ງທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.
- ຊີ້ນຳ, ຮັບຟັງການລາຍງານຈາກກອງເລຂາຄະນະວິຊາການຈັດສັນແຫຼ່ງທ່ອງທ່ຽວໃນຂອບເຂດທົ່ວປະເທດ, ປະສານງານກັບພາກສ່ວນກ່ຽວຂ້ອງເພື່ອແກ້ໄຂບັນຫາຕາມພາລະບົດບາດຂອງແຕ່ລະຂະແໜງການ.
- ຊີ້ນຳກອງປະຊຸມປຶກສາຫາລືຮ່ວມກັບຂະແໜງການຕ່າງໆ ໃນການສ້າງບົດແນະນຳການກຳນົດຮູບແບບ ແລະ ວິທີການຈັດສັນແຫຼ່ງທ່ອງທ່ຽວ.
- ພິຈາລະນາ ແລະ ຮັບຮອງເອົາການກຳນົດເຂດປົກຫຸ້ມໝາຍແຫຼ່ງທ່ອງທ່ຽວ ແລະ ບົດລາຍງານການຈັດສັນແຫຼ່ງທ່ອງທ່ຽວ ໃນຂອບເຂດທົ່ວປະເທດໂດຍກອງເລຂາ

ການຈັດສັນແຫຼ່ງທ່ອງທ່ຽວຈະເປັນຜູ້ນຳສະເໜີຕໍ່ຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວ.

- ຊີ້ນຳບັນດາແຂວງ/ນະຄອນຫຼວງ ແລະ ຂະແໜງການທີ່ກ່ຽວຂ້ອງຕາມສາຍຕັ້ງຂອງຕົນດຳເນີນ ການຈັດຕັ້ງປະຕິບັດການຈັດສັນແຫຼ່ງທ່ອງທ່ຽວໃຫ້ສຳເລັດ.
- ລາຍງານການຈັດຕັ້ງປະຕິບັດແຕ່ລະໄລຍະໃຫ້ຂັ້ນເທິງຮັບຊາບເພື່ອຊີ້ນຳ ແລະ ແກ້ໄຂບັນຫາໃຫ້ທັນເວລາ.

2. ຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວ ຂັ້ນທ້ອງຖິ່ນ

ຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວຂັ້ນທ້ອງຖິ່ນ ປະກອບມີດັ່ງລຸ່ມນີ້:

1. ທ່ານ ຮອງເຈົ້າຄອງນະຄອນຫຼວງ/ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານ ຖວທ ເປັນຫົວໜ້າ
2. ທ່ານ ຫົວໜ້າພະແນກ ຖວທ ແຂວງ ເປັນຄະນະ
3. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ 2 ທ່ານ (ຂະແໜງທີ່ດິນ ແລະ ສິ່ງແວດລ້ອມ) ເປັນຄະນະ
4. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າພະແນກພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຄະນະ
5. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ເປັນຄະນະ
6. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ເປັນຄະນະ
7. ທ່ານ ຫົວໜ້າ ຫຼື ຮອງຫົວໜ້າຫ້ອງວ່າການເມືອງແຕ່ລະເມືອງ ເປັນຄະນະ

- **ພາລະບົດບາດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບ ການຈັດສັນແຫຼ່ງທ່ອງທ່ຽວຂັ້ນນະຄອນຫຼວງ ແລະ ບັນດາແຂວງ.**

- ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ລົງເຜີຍແຜ່ບົດແນະນຳ ແລະ ເງື່ອນໄຂການຈັດສັນແຫຼ່ງທ່ອງທ່ຽວໃຫ້ບັນດາຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ, ບັນດາເມືອງ, ພາກທຸລະກິດພາຍໃນແຂວງຂອງຕົນ, ໃຫ້ຮັບຊາບ ແລະ ເຂົ້າໃຈ.
- ຮ່ວມກັບພະແນກ ຖວທ, ຂະແໜງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງຈັດຕັ້ງປະຕິບັດການຈັດສັນແຫຼ່ງທ່ອງທ່ຽວໃຫ້ສຳເລັດ.
- ສະເໜີເຖິງອຳນາດການປົກຄອງແຂວງ ເພື່ອຮັບຮອງເອົາການກຳນົດຂອບເຂດປົກຫຸ້ມໝາຍແຫຼ່ງທ່ອງທ່ຽວ ແລະ ບົດລາຍງານການຈັດສັນແຫຼ່ງທ່ອງທ່ຽວໃນຂອບເຂດແຂວງຂອງຕົນ.
- ປະສານງານກັບຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວຂັ້ນສູນກາງ ໂດຍແມ່ນກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ເປັນໃຈກາງ.

- ລາຍງານການຈັດຕັ້ງປະຕິບັດແຕ່ລະໄລຍະ ໃຫ້ອຳນາດການປົກຄອງແຂວງ ແລະ ກະຊວງ ຖວທ ຮັບຊາບເພື່ອຊີ້ນຳ ແລະ ແກ້ໄຂບັນຫາໃຫ້ທັນເວລາ.
- ຄະນະຮັບຜິດຊອບຈັດສັນແຫຼ່ງທ່ອງທ່ຽວ ຂັ້ນນະຄອນຫຼວງ/ບັນດາແຂວງ ມີໜ້າທີ່ເກັບກຳສັງລວມຂໍ້ມູນ, ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດການຈັດສັນແຫຼ່ງທ່ອງທ່ຽວໃຫ້ສຳເລັດ, ທັນຕາມກຳນົດເວລາ ແລະ ລາຍງານໃຫ້ຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວຂັ້ນສູນກາງຮັບຊາບຢ່າງຕໍ່ເນື່ອງ ເພື່ອພິຈາລະນາແກ້ໄຂບັນຫາໃຫ້ທັນເວລາ.
- ພະແນກ ຖວທ ແຕ່ລະແຂວງເປັນຈຸດໃຈກາງການປະສານງານວຽກງານການຈັດສັນແຫຼ່ງທ່ອງທ່ຽວກັບພາກສ່ວນກ່ຽວຂ້ອງພາຍໃນແຂວງຂອງຕົນ.

3. ທິມງານຈັດສັນແຫຼ່ງທ່ອງທ່ຽວ

ທິມງານຈັດສັນແຫຼ່ງທ່ອງທ່ຽວໝາຍເຖິງພະນັກງານວິຊາການຜູ້ທີ່ຈະລົງໄປ ສຳຫຼວດຈັດສັນແຫຼ່ງທ່ອງທ່ຽວຕົວຈິງ. ພາກສ່ວນຈາກສູນກາງແມ່ນພະນັກງານຈາກກົມພັດທະນາການທ່ອງທ່ຽວ, ສ່ວນທ້ອງຖິ່ນແມ່ນຈາກຂະແໜງການທີ່ກ່ຽວຂ້ອງດັ່ງລາຍລະອຽດລຸ່ມນີ້:

1. ທ່ານ ຮອງຫົວໜ້າກົມ ພັດທະນາການທ່ອງທ່ຽວ ກະຊວງ ຖວທ ເປັນຫົວໜ້າ
2. ທ່ານ ຫົວໜ້າພະແນກ ຖວທ ແຂວງ ເປັນຮອງ
3. ທ່ານ ຫົວໜ້າພະແນກສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ເປັນຄະນະ
4. ທ່ານ ຫົວໜ້າພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ເປັນຄະນະ
5. ທ່ານ ຜູ້ຕາງໜ້າຈາກພະແນກຊັບພະຍາກອນທຳມະຊາດແລະ ສິ່ງແວດລ້ອມ ແຂວງ 2 ທ່ານ (ຜູ້ຮັບຜິດຊອບວຽກທີ່ດິນ 1 ທ່ານ, ຜູ້ຮັບຜິດຊອບວຽກສິ່ງແວດລ້ອມ 1 ທ່ານ) ເປັນຄະນະ
6. ທ່ານ ຜູ້ຕາງໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ເປັນຄະນະ
7. ທ່ານ ຜູ້ຕາງໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ເປັນຄະນະ
8. ທ່ານ ຜູ້ຕາງໜ້າ ກະຊວງປ້ອງກັນປະເທດ ເປັນຄະນະ

(ໃນກໍລະນີແຫຼ່ງທ່ອງທ່ຽວທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງປ້ອງກັນປະເທດ)

9. ວິຊາການຈາກພະແນກສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວ, ແລະ ພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ເປັນຄະນະ
10. ວິຊາການຈາກພະແນກຖວທ ແຂວງ (ໜ່ວຍງານ ວາງແຜນ ແລະ ພັດທະນາການທ່ອງທ່ຽວແຂວງ 2 ທ່ານ) ເປັນຄະນະ

- **ພາລະບົດບາດ ແລະ ໜ້າທີ່ຂອງກອງເລຂາການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ.**
  - ກອງເລຂາຈັດສັນແຫຼ່ງທ່ອງທ່ຽວຂັ້ນສູນກາງ ໂດຍສະເພາະແມ່ນພະນັກງານວິຊາການຈາກກົມພັດທະນາການທ່ອງທ່ຽວ ກະຊວງ ຖວທ ເປັນເຈົ້າການໃນການຄົ້ນຄວ້າ ແລະ ສ້າງເອກະສານຄູ່ມືການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ.
  - ກອງເລຂາການຈັດສັນແຫຼ່ງທ່ອງທ່ຽວ ມີໜ້າທີ່ເກັບກຳສັງລວມຂໍ້ມູນ, ປະສານງານກັບບັນດາແຂວງ, ຂະແໜງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ເພື່ອປັບປຸງເອກະສານໃຫ້ລະອຽດ ແລະ ແທດເໝາະແລ້ວລາຍງານຕໍ່ຄະນະຮັບຜິດຊອບຈັດສັນແຫຼ່ງທ່ອງທ່ຽວຂັ້ນສູນກາງ.
  - ກອງເລຂາການຈັດສັນແຫຼ່ງທ່ອງທ່ຽວມີໜ້າທີ່ຈັດກອງປະຊຸມປຶກສາຫາລືຮ່ວມກັບຂະແໜງການຕ່າງໆ ເພື່ອປັບປຸງເອກະສານບົດແນະນຳການກຳນົດຮູບແບບ ແລະ ວິທີການຈັດສັນແຫຼ່ງທ່ອງທ່ຽວຕາມການສະເໜີຂອງກອງປະຊຸມ ແລະ ສອດຄ່ອງກັບສະພາບການທ່ອງທ່ຽວຂອງ ສປປ ລາວ. ແລ້ວນຳສະເໜີລາຍງານຕໍ່ຄະນະຮັບຜິດຊອບຈັດສັນແຫຼ່ງທ່ອງທ່ຽວຂັ້ນສູນກາງຂໍການຮັບຮອງເອກະສານດັ່ງກ່າວຈາກຂັ້ນເທິງ.
  - ປະສານງານກັບຂະແໜງການທີ່ກ່ຽວຂ້ອງ ແລະ ບັນດາແຂວງ ເພື່ອຈັດຕັ້ງປະຕິບັດການຈັດສັນແຫຼ່ງທ່ອງທ່ຽວ, ສ້າງບົດລາຍງານການສຳຫຼວດ ແລະ ກຳນົດແນວຄວາມຄິດໃນການພັດທະນາແຫຼ່ງທ່ອງທ່ຽວໃນແຕ່ລະແຫ່ງ ແລ້ວນຳສະເໜີລາຍງານຕໍ່ຄະນະຮັບຜິດຊອບຈັດສັນແຫຼ່ງທ່ອງທ່ຽວຂັ້ນແຂວງເພື່ອພິຈາລະນາ ແລະ ຮັບຮອງ.
  - ປະສານງານກັບນະຄອນຫຼວງ, ບັນດາແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອຕິດຕາມ, ປະເມີນຜົນການຈັດສັນແຫຼ່ງທ່ອງທ່ຽວໃນແຕ່ລະໄລຍະ ເພື່ອຖອດຖອນບົດຮຽນ ແລະ ຊອກຫາວິທີແກ້ໄຂບັນຫາທີ່ເກີດຂຶ້ນ.
  - ລາຍງານການຈັດຕັ້ງປະຕິບັດແຕ່ລະໄລຍະ ໃຫ້ຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວຮັບຊາບເພື່ອຊີ້ນຳ ແລະ ແກ້ໄຂບັນຫາໃຫ້ທັນເວລາ.

ພາກທີ IV: ສະຫຼຸບ ແລະ ແນະນຳຂັ້ນຕອນການຈັດຕັ້ງປະຕິບັດ

1. ສະຫຼຸບ

ເອກະສານຄູ່ມືການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ ສະບັບນີ້ໄດ້ກຳນົດບັນດາອົງປະກອບທີ່ຈຳເປັນໃນການຈັດສັນແຫຼ່ງທ່ອງທ່ຽວເຊັ່ນ: ກຳນົດເງື່ອນໄຂປະເພດຂອງແຫຼ່ງທ່ອງທ່ຽວ ຊຶ່ງໄດ້ແບ່ງອອກເປັນ 3 ປະເພດຄື: ແຫຼ່ງທ່ອງທ່ຽວທາງທຳມະຊາດ, ແຫຼ່ງທ່ອງທ່ຽວທາງວັດທະນະທຳ, ແລະ ແຫຼ່ງທ່ອງທ່ຽວທາງປະຫວັດສາດ. ໃນນີ້, ຍັງໄດ້ກຳນົດຂັ້ນຕອນຂອງການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ, ແລະ ໄດ້ກຳນົດໂຄງປະກອບ ແລະ ພາລະບົດບາດຂອງຄະນະຈັດສັນແຫຼ່ງທ່ອງທ່ຽວ.

ການຈັດຕັ້ງປະຕິບັດ ການຈັດສັນແຫຼ່ງທ່ອງທ່ຽວ ຄວນທົບທວນຄືນທຸກໆຂັ້ນຕອນຂອງການຈັດສັນແຫຼ່ງທ່ອງທ່ຽວ ເປັນຕົ້ນແມ່ນການກຳນົດຂອບເຂດຂອງແຫຼ່ງທ່ອງທ່ຽວ, ແຜນກິດຈະກຳດ້ານການທ່ອງທ່ຽວ ແລະ ການໃຫ້ຄຳແນະນຳດ້ານຕ່າງໆຕ້ອງມີຄວາມເປັນໄປໄດ້ ແລະ ສາມາດຈັດຕັ້ງປະຕິບັດໄດ້. ການພັດທະນາການທ່ອງທ່ຽວຕ້ອງໄດ້ມີການປະເມີນຜົນການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ, ຫຼັງການຈັດຕັ້ງປະຕິບັດ ເພື່ອຮັບປະກັນວ່າໄດ້ບັນລຸຕາມຈຸດປະສົງທີ່ກຳນົດໄວ້ໃນເບື້ອງຕົ້ນ

ສະຫຼຸບລວມແລ້ວການຈັດສັນແຫຼ່ງທ່ອງທ່ຽວແມ່ນການສ້າງພື້ນຖານ ໃຫ້ແກ່ການພັດທະນາ ແລະ ການຄຸ້ມຄອງແຫຼ່ງທ່ອງທ່ຽວ, ແນໃສ່ໃຫ້ມີການຈັດການບໍລິຫານທີ່ເປັນລະບົບ ແລະ ກ້າວໄປສູ່ການຈັດລະດັບແຫຼ່ງທ່ອງທ່ຽວຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການທ່ອງທ່ຽວ.

2. ແນະນຳຂັ້ນຕອນການຈັດຕັ້ງປະຕິບັດ

- ກົມແຜນການ ແລະ ການຮ່ວມມື, ກະຊວງ ຖວທ ລົງເຜີຍແຜ່ເອກະສານການກຳນົດຮູບແບບ ແລະ ວິທີການຈັດສັນແຫຼ່ງທ່ອງທ່ຽວໃຫ້ແຕ່ລະແຂວງຢ່າງລະອຽດ ເພື່ອໃຫ້ມີຄວາມເຂົ້າໃຈກ່ຽວກັບວິທີການ ແລະ ຂັ້ນຕອນການຈັດຕັ້ງປະຕິບັດ.
- ໃຫ້ແຕ່ລະແຂວງສ້າງຕັ້ງທີມງານຈັດສັນແຫຼ່ງທ່ອງທ່ຽວ ໂດຍແມ່ນພະແນກທ່ອງທ່ຽວແຂວງເປັນເຈົ້າການ.
- ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ຈະປະສານງານກັບບັນດາແຂວງຊ່ວຍຈັດຕັ້ງປະຕິບັດການຈັດສັນແຫຼ່ງທ່ອງທ່ຽວແຂວງລະ 1 ແຫ່ງ ເພື່ອເຮັດເປັນຕົວຢ່າງ. ຫຼັງຈາກນັ້ນໃຫ້ແຕ່ລະແຂວງສືບຕໍ່ຈັດສັນແຫຼ່ງທ່ອງທ່ຽວພາຍໃນແຂວງຂອງຕົນໃຫ້ສຳເລັດ.

- ໃນແຕ່ລະໄລຍະຂອງການຈັດສັນແຫຼ່ງທ່ອງທ່ຽວກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ລົງຕິດຕາມ ແລະ ໃຫ້ການແນະນຳທາງດ້ານວິຊາການຢ່າງຕໍ່ເນື່ອງ ແລະ ຈະໄດ້ ຈັດກອງປະຊຸມຖອດຖອນບົດຮຽນກ່ຽວກັບການປະຕິບັດກິດຈະກຳ ດັ່ງກ່າວຂອງບັນດາ ແຂວງພາຍໃນທົ່ວປະເທດ ເພື່ອເຮັດໃຫ້ການຈັດສັນແຫຼ່ງທ່ອງທ່ຽວໄດ້ຮັບການຈັດຕັ້ງປະ ຕິບັດຢ່າງມີປະສິດທິຜົນ ແລະ ສຳເລັດຕາມຄາດໝາຍ.

3. ຂອບເຂດ ແລະ ວິທີການນຳໃຊ້

ເອກະສານຄູ່ມືການກຳນົດຮູບແບບ ແລະ ວິທີການຈັດສັນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ ສະບັບນີ້ແມ່ນຂຽນອອກມາເພື່ອເປັນການແນະນຳທາງດ້ານວິຊາການ ສຳລັບການຈັດສັນແຫຼ່ງ ທ່ອງທ່ຽວ. ລາຍລະອຽດໃນແຕ່ລະຂັ້ນຕອນ ແລະ ວິທີການໄດ້ກຳນົດຢ່າງຈະແຈ້ງພໍສົມຄວນລວມ ທັງໂຄງປະກອບ, ພາລະບົດບາດຂອງຄະນະຮັບຜິດຊອບການຈັດສັນແຫຼ່ງທ່ອງທ່ຽວໃນຂັ້ນສູນ ກາງ ແລະ ຂັ້ນແຂວງ.

ຂອບເຂດການນຳໃຊ້ຄູ່ມືການຈັດສັນແຫຼ່ງທ່ອງທ່ຽວສະບັບນີ້ ແມ່ນສຳລັບພະນັກງານວິ ຊາການຈາກຂະແໜງການ ຖວທ ແລະ ຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະແມ່ນຄະນະ ຮັບຜິດຊອບທີ່ຈະລົງຈັດຕັ້ງປະຕິບັດຕົວຈິງ. ດັ່ງນັ້ນ, ທີມງານສຳຫຼວດຈັດສັນແຫຼ່ງທ່ອງທ່ຽວຄວນ ສຶກສາເອກະສານດັ່ງກ່າວນີ້ ເພື່ອໃຫ້ມີຄວາມເຂົ້າໃຈ ແລະ ມີຄວາມເປັນເອກະພາບໃນການ ຈັດຕັ້ງປະຕິບັດໃນແຕ່ລະຂັ້ນຕອນ.